**ຄຳແນະນຳສຳລັບຄຣູສອນ**

ບົດຮຽນທີ 1

ຂ່າວປະເສີດແມ່ນຫຍັງ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 1:1-17

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 1:1-17

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າມີພຣະປະສົງໃຫ້ມະນຸດເຮົາມີຊີວິດອັນບໍຣິບູນ.

<u>ຄຳຖາມເພື່ອການສຳຣວດ:</u> ການສຳຄັນອັນໃດທີ່ພຣະເຈົ້າເຮັດໃນຊີວິດຂອງທ່ານແລະຄົນອື່ນໆດ້ວຍ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ທຸກຄົນເຂົ້າໃຈໃນຂ່າວປະເສີດໄດ້ປ່ຽນແປງຊີວິດແລະເພື່ອ
ໃຫ້ທ່ານປະກອບສ່ວນໃນຂ່າວປະເສີດນັ້ນດ້ວຍ.

<u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ເລີ້ມເຫລົ່າເຣື່ອງການເປັນມາຂອງພຣະທັມໂຣມເປັນຂ່າວປະເສີດສຳລັບໂລກ. ໂປໂລໄດ້ຂຽນຈົດໝາຍເລີ້ມຕົ້ນແນວໃດ? ແລະຈົດໝາຍເວົ້າເຖິງອັນໃດ? ເນັ້ນໜັກຄຳວ່າ <u>ຄວາມບາບ</u>, <u>ພຣະຄຸນ</u>, <u>ຂ່າວປະເສີດ</u>, <u>ຄົນຍິວ</u> ແລະນຳເຂົ້າໃຊ້ໃນຊີວິດຢ່າງໃດ?
2. ຂຽນຄຳວ່າ ຂ່າວປະເສີດ ໃສ່ກະດານຫລືຂຽນໃສ່ເຈັ້ຽແຜ່ນໃຫຍ່ ແລະຖາມນັກຮຽນວ່າທ່ານໄດ້ຮັບຂ່າວດີອັນໃດແດ່ໃນອາທິດທີ່ຜ່ານມາ? ຈາກນັ້ນກໍເວົ້າເຣື່ອງຂ່າວປະເສີດທີ່ປ່ຽນແປງຊີວິດໃຫ້ນັກຮຽນຟັງ. ໃຫ້ນັກຮຽນຈັກຄົນຫລືສອງຄົນໄດ້ເວົ້າເຖິງຕົນເອງໄດ້ຮັບຂ່າວປະເສີດທີ່ປ່ຽນແປງຊີວິດແນວໃດ?
3. ບອກນັກຮຽນຮູ້ວ່າຂ່າວປະເສີດທີ່ໂປໂລໄດ້ປະກາດນັ້ນເປັນຂ່າວປະເສີດອັນດຽວແລະອັນສຸດທ້າຍ

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

4. ຄຣູສອນອ່ານໂຣມ 1:1 ແລະສັງເກດເບິ່ງຄຳເວົ້າ ຜູ້ຮັບໃຊ້, ຊົງເອີ້ນໃຫ້ເປັນອັຄສາວົກ, ແຕ່ງຕັ້ງໄວ້ໃຫ້ເປັນຜູ້ປະກາດ. ແລ້ວຖາມນັກຮຽນມີສິ່ງໃດອີກທີ່ທ່ານຈຳໄດ້ກ່ຽວກັບໂປໂລ. ອ່ານ ກິຈການ :1-4; 16:9,22; 19:11
5. ເນັ້ນໜັກຄຳວ່າ <u>ສາວົກ</u> ຕາມປົກກະຕິແລ້ວແມ່ນສາວົກສິບສອງຄົນທີ່ຕິດຕາມພຣະເຢຊູ ຊຶ່ງໂປໂລບໍ່ແມ່ນໃນຈຳນວນສິບສອງຄົນນັ້ນ. ສັງເກດໃນ 1:1 ຊຶ່ງໂປໂລໄດ້ຮ້ອງຕົນເອງເປັນສາວົກທີ່ຖືກເອີ້ນມາໃຫ້ເປັນຜູ້ປະກາດຂ່າວປະເສີດ. ເພື່ອເປັນການຢັ້ງຢືນວ່າໂປໂລເປັນສາວົກໃຫ້ເບິ່ງໃນ ໂຣມ 11:13; 1ໂກຣິນໂທ 1:1; :1-2; 15:8-9; 2 ໂກຣິນໂທ 1:1; 12:12; ຄາລາເຕັຽ 1:1, 11-2:16, ເອເຟໂຊ 1:1; ໂກໂລຊາຍ 1:1; 1ຕີໂມທຽວ 1:1; 2:7; ແລະ 2 ຕີໂມທຽວ 1:1,11.

**ຄຳແນະນຳສຳລັບຄຣູສອນ**

Copyright © 2000 by BAPTISTWAY.
ສງວນລິກຂະສິດ

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY, Baptist General Convention of Texas, 333 North Washington, Dallas, TX 75246-1798.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒໐໐໐

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, State Missions Commission: James Semple
Director, Bible Study/Discipleship Division: Bernard M. Spooner

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 2&3
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2&3
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 4
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the Laotian Team
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, New Work Consultant, Multi-Ethnic, Baptist General Convention of Texas
Nelda P. Williams, Facilitators Coordinator, Consultant, Bible Study/Discipleship Division, Baptist General Convention of Texas

6. ອ້າງເຖິງ ໂຣມ 1: 2 ຖາມນັກຮຽນ ທີ່ໂປໂລໄດ້ກ່າວວ່າພຣະອົງໄດ້ສັນຍາໄວ້ລ່ວງໜ້ານັ້ນໝາຍຄວາມວ່າ ຢ່າງໃດ?
7. ໃນ 1:3-4 ສິ່ງໃດໄດ້ຢັ້ງຢືນວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ? ອ່ານ 1ໂກຣິນໂທ 15:12-19 ໃນ ການຟື້ນພຣະຊົນຂອງພຣະເຢຊູ.
8. ເວົ້າເຖິງ <u>ພຣະຄຸນ</u> ໃນ 1:5 ໃຫ້ນັກຮຽນແປແລະຕີຄວາມໝາຍຄຳນີ້

- ເຂົ້າໃຈແນວໃດ? ໃຜສົມຄວນໄດ້ຮັບພຣະຄຸນ?
- ເປັນຫຍັງພຣະເຈົ້າຈຶ່ງມີພຣະຄຸນຕໍ່ເຮົາ ຫລືເຮົາເປັນໜີ້ບຸນຄຸນພຣະອົງແນວໃດແດ່?
- ເຮົາສົມຄວນຈະຕອບບຸນແທນຄຸນຢ່າງໃດ?

9. ຂໍໃຫ້ຜູ້ນຶ່ງອ່ານ 1:6-8 ໂປໂລເປັນຫຍັງຈຶ່ງຂອບພຣະຄຸນພຣະເຈົ້າ? ສິ່ງໃດເປັນຫລັກຖານໃນການຂອບ ພຣະຄຸນພຣະເຈົ້າ.
10. ຂໍໃຫ້ຜູ້ນຶ່ງອ່ານ 1:9-13 ໂປໂລມີຄວາມສັມພັນອັນໃດແດ່? ທີ່ໂປໂລເວົ້າວ່າ ເມື່ອອ້ອນວອນລະນຶກ ເຖິງທ່ານຢູ່ສເມີມີຄວາມໝາຍຢ່າງໃດ?
11. ຂໍໃຫ້ຜູ້ນຶ່ງອ່ານ 1:14-15 ເຮົາເປັນໜີ້ພວກສີວິໄລແລະພວກຕ່ຳຊ້າໝາຍຄວາມວ່າແນວໃດ? ຮີບຮ້ອນປະກາດໝາຍຄວາມວ່າແນວໃດ? (ສີວິໄລແປວ່າຄົນຮັ່ງມີ, ຄົນຕ່ຳຊ້າແປວ່າຄົນຊັ້ນຕ່ຳ) ມີເຈົ້າຂອງທີ່ດິນຕອນນຶ່ງໄດ້ລ້ຽງງົວຝູງນ້ອຍຝູງນຶ່ງໄດ້ຈ້າງຄົນລ້ຽງງົວໃນທົ່ງນັ້ນມາເປັນເວລານານສົມຄວນ ວັນນຶ່ງສິດຍາພິບານຂອງທ່ານໄດ້ຖາມວ່າ ທ່ານເຄີຍໄດ້ບອກຂ່າວປະເສີດໃຫ້ແກ່ຄົນລ້ຽງງົວ(ຄົນໃຊ້) ຂອງທ່ານບໍ່? ຄົນນັ້ນກໍຮູ້ສຶກລະອາຍທີ່ບໍ່ເຄີຍບອກຂ່າວປະເສີດໃຫ້ຄົນລ້ຽງງົວຟັງຈັກເທື່ອ. ທ່ານກໍເຊັ່ນດຽວ ກັນ ບາງທີ່ທ່ານອາຈເປັນເຈົ້າຂອງອັນໃດອັນນຶ່ງທີ່ມີຄົນງານຢູ່, ຫລືເຮັດງານຮູ້ຈັກກັບເພື່ອນນັ້ນຕັ້ງນານແຕ່ ບໍ່ເຄີຍບອກເຣື່ອງຂ່າວປະເສີດໃຫ້ຟັງຈັກເທື່ອ ຫາກພຣະເຈົ້າຖາມທ່ານແລະທ່ານຈະຕອບພຣະອົງແນວໃດ?
12. ຈົ່ງເນັ້ນໜັກໃນຂໍ້ 16-17 ແລະຖາມດັ່ງນີ້:

- ຂ່າວປະເສີດມີເພື່ອໃຜແດ່?
- ຄົນທີ່ຈະໄດ້ຮັບຄວາມພົ້ນຕ້ອງເປັນຄົນແນວໃດ?
- ບາງຄັ້ງເຮົາບໍ່ໄດ້ປະກາດເພາະດ້ວຍເຫດໃດ?
- ຫາກເຮົາບໍ່ປະກາດແມ່ນໃຜຈະປະກາດເພາະພຣະອົງເລືອກເຮົາເປັນຜູ້ປະກາດ

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

13. ບອກນັກຮຽນເຖິງຄົນໃນຣັຖເທັກຊັດປາກເວົ້າກວ່າ 120 ພາສາຊາດ ມີພາໃດທີ່ທ່ານເວົ້າໄດ້ຈົ່ງເວົ້າກັບ ທຸກຄົນ ເພະຄົນອື່ນຢາກບອກຂ່າວປະເສີດນີ້ໃຫ້ແກ່ຄົນໃນພາສາຂອງທ່ານແຕ່ເພິ່ນບໍ່ເຂົ້າໃຈພາສາ ດັ່ງນັ້ນພາສາທີ່ທ່ານເວົ້າໄດ້ຈຶ່ງກາຍເປັນພາຣະຂອງທ່ານທີ່ພຣະເຈົ້າຊົງມອບໝາຍໃຫ້.
14. ເວົ້າເຖິງ ບໍ່ມີຄວາມລະອາຍໃນຂ່າວປະເສີດໝາຍຄວາມວ່າຢ່າງໃດ? ໃຫ້ນັກຮຽນອອກຄຳເຫັນ.
15. ຂໍໃຫ້ນັກຮຽນອະທິບາຍຂ່າວປະເສີດມີຄວາມໝາຍອັນໃດຕໍ່ຊີວິດ, ເປັນຫຍັງເຮົາຈຶ່ງຕ້ອງການຂ່າວປະ ເສີດ? ຂ່າວປະເສີດປ່ຽນແປງທ່ານແນວໃດ? ແລະຈາກນັ້ນຄຣູກໍນຳພາການອ້ອນວອນປິດ

## **ຄຳແນະນຳສຳລັບຄຣູສອນ**

## ບົດຮຽນທີ 2

## ຊີງພຣະພິໂຣດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 1:18-32

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 1:18-32

<u>ຈຸດສຳຄັນຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າຜູ້ທີ່ປະຕິເສດບໍ່ຍອມຮັບເອົາຂ່າວປະເສີດຈະຖືກພິພາກສາລົງໂທດ.

<u>ຄຳຖາມເພື່ອການສຳຣວດ:</u> ການມີຊີວິດຕາມໃຈຊອບມີຜົນສະທ້ອນແນວໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ຈະຊ່ອຍຊີ້ແຈງເຖິງການລົງໂທດຄົນທຸກຄົນທີ່ບໍ່ຍອມສະຣະພາບຜິດບາບໃນວັນສຸດທ້າຍ.

### <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈີງ</u> (ໃຊ້ເວລາ 5 ນາທີ)

1. ເລົ່າເຣື່ອງຂ່າວປະເສີດໃນຖ້າມກາງໂລກຫວຸ້ນວາຍ, ຖາມນັກຮຽນຫາກບໍ່ມີຂ່າວປະເສີດໂລກນີ້ຈະເປັນແນວໃດ?
2. ໃນພຣະທັມໂຣມໄດ້ເວົ້າເຖິງຄົນທີ່ເຊື່ອແລະບໍ່ເຊື່ອ ພຣະເຈົ້າຈະຈັດການຢ່າງໃດ? ໂດຍສະເພາະຢ່າງຍິ່ງ ແມ່ນຜູ່ທີ່ປະຕິເສດບໍ່ຍອມຮັບເຊື່ອ ພຣະອົງໄດ້ເຮັດແນວໃດແລ້ວ?

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ

3. ຂໍໃຫ້ຜູ້ນຶ່ງອ່ານ ໂຣມ 1:18 -20. ອະທິບາຍ ພຣະພິໂຣດ (ໃຈຮ້າຍ) ແລະມະນຸດໃຈຮ້າຍຕ່າງກັນແນວໃດ?
4. ພຣະເຈົ້າເປີດເຜີຍພຣະອົງເອງໃຫ້ມະນຸດເຫັນຢ່າງໃດໃນຂໍ້ 19-20? ເປັນຫຍັງພຣະອົງຈຶ່ງເປີດເຜີຍຕົນເອງ? ມະນຸດຈະມີຂໍ້ແກ້ຕົວຢ່າງໃດວ່າບໍ່ຢູ່ຕໍ່ໜ້າພຣະອົງໃນວັນສຸດທ້າຍ?
5. ອ່ານ 1:21-23 ມະນຸດຈະຕ້ອງຮັບຜິດຊອບແນວໃດຕໍ່ພຣະເຈົ້າ? ຄົນທີ່ປະຕິເສດພຣະເຈົ້າຈິດໃຈຂອງເຂົາເຈົ້າເປັນແນວໃດ?
6. ອ່ານ 1: 24-25 ພຣະເຈົ້າໄດ້ປ່ອຍໃຫ້ສິ່ງໃດເກີດຂຶ້ນໃນຊີວິດຂອງຄົນທີ່ຮູ້ຈັກແລ້ວແຕ່ບໍ່ຍອມເຊື່ອຟັງ?
7. ອ່ານ 1:24, 26-27 ຄົນທີ່ເຮັດຕາມຣາຄະຕັນຫາຈະມີສິ່ງໃດເກີດຂຶ້ນໃນຊີວິດແລະຄອບຄົວເຂົາເຈົ້າ?
8. ໃຫ້ນັກຮຽນຄົ້ນຄວ້າ 1:21-32 ແລະໃຫ້ນັກຮຽນຕອບຕາມນີ້ທີ່ໂປໂລໄດ້ກ່າວສິ່ງເກີດຂຶ້ນກັບທຸກຄົນ.

- ຮູ້ຈັກພຣະເຈົ້າແລ້ວ ກໍບໍ່ຖວາຍກຽດດ້ວຍໃຈໂງ່ຈ້າ
- ເອົາສິ່ງຕ່າງໆມາແທນສະງ່າຣາສີພຣະເຈົ້າ
- ຜູ້ຍິງມີຊູ້ (ນອກໃຈສາມີ)
- ຊາຍຫລິ້ນກັບຊາຍ
- ການອະທັມທຸກຢ່າງ

- ຂ້າຟັນ ແລະທະເລາະວິວາດກັນ ເບິ່ງບໍ່ອອກອັນໃດຖືກອັນໃດຜິດ.
  ໃນຈຳນວນຂ້າງເທິງນີ້ມີສິ່ງໃດທີ່ເກີດຂຶ້ນໃນທຸກວັນນີ້?

9. ຈາກຂໍ້ 24-32 ເປັນດ້ວຍເຫດໃດສິ່ງເຫລົ່ານີ້ຈຶ່ງເກີດຂຶ້ນ?

10. ຫາກຜູ້ທີ່ເຊື່ອພຣະເຈົ້າຍັງດຳເນີນຊີວິດຕາມຣາຄະຕັນຫາຢູ່ ສິ່ງຈະເກີດຂຶ້ນມີດັ່ງນີ້:

- ມີຄວາມສຸກຊົ່ວຄາວ
- ເຂົາເຈົ້າຈະບໍ່ເຫັນຄວາມຜິດບາບໃນຕົວເອງເພາະຄວາມບາບໄດ້ບັງໄວ້
- ອາຈເຮັດໃຫ້ຄົນອື່ນເຮັດຕາມແບບຢ່າງຜິດກໍເປັນໄດ້ ເພາະລາວເປັນຜູ້ເຊື່ອພຣະເຈົ້າແລ້ວ
- ຄຣູຖາມນັກຮຽນເພີ້ມ ມີສິ່ງອື່ນອີກບໍ່?

11. ຈາກຂໍ້3 ຄົນທີ່ຮູ້ຈັກພຣະເຈົ້າແລ້ວແທນທີ່ຈະຢຳເກງພຣະເຈົ້າແຕ່ຍັງເຮັດຢ່າງບໍ່ສົມຄວນຢູ່ຜົນສະທ້ອນ
    ຈະເປັນແນວໃດ?

<u>ບົດຮຽນທີ່ນຳໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

12. ທ່ານຈະຖວາຍກຽດແລະຮັບໃຊ້ພຣະອົງແນວໃດໃນອາທິດນີ້?

- ທ່ານຈະເຮັດແນວໃດກັບຄົນທີ່ຮູ້ຈັກພຣະເຈົ້າແລ້ວຍັງເຮັດບາບຢູ່?
- ທ່ານໄດ້ເປັນຕົວຢ່າງທີ່ດີແລ້ວບໍ່? ຖ້າບໍ່ດີຄວນຈະປ່ຽນບ່ອນໃດ? ມື້ໃດຈະປ່ຽນ?
- ໃນຈຳນວນເພື່ອນຝູງແລະຜູ້ທີ່ທ່ານຮັກແພງຍັງມີໃຜຍັງເປັນເຊັ່ນນີ້ຢູ່? ທ່ານຈະເຮັດແນວໃດ?

13. ຄຣູສອນນຳການອ້ອນວອນປິດແລະອ້ອນວອນສຳລັບຜູ້ທີ່ບໍ່ຍອມຮັບເຊື່ອພຣະເຈົ້າ, ອ້ອນວອນເພື່ອ
    ຄຣິສຕຽນທີ່ຍັງໃຊ້ຊີວິດເໝືອນຄົນທີ່ບໍ່ຮູ້ຈັກກັບພຣະເຈົ້າດ້ວຍ.

**ຄຳແນະນຳສຳລັບຄຣູສອນ**

ບົດຮຽນທີ 3

# ເປັນຫຍັງຖືສາສນາຍັງບໍ່ພໍ?

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 2:1-13, 28-29;3:19-20

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 2:1--3:20

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ເຮົາຮູ້ວ່າເຮົານັບຖືສາສນາດີປານໃດກໍຕາມກໍບໍ່ສາມມາ ຕລອດໄດ້ຫາກຂາດການປະຕິບັດ

<u>ຄຳຖາມເພື່ອການສຳຣວດ:</u> ການດີອັນໃດທີ່ຄົນເຮົາມັກເຮັດແທນທີ່ຈະເຊື່ອແລະປະຕິບັດພຣະເຈົ້າ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍໃຫ້ຮູ້ວ່າຄວາມດີແລະການນັບຖືສາສນາບໍ່ພໍ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າໄປໃຊ້ໃນຊີວິດ</u> ( ໃຊ້ເວລາ 5 ນາທີ )

1. ຈົ່ງສັງເກດເບິ່ງເຈົ້າໜ້າທີ່ຕຳຣວດກວດກາເບິ່ງຄົນຂັບຣົຖໃນຖນົນຫົນທາງຕລອດເຖິງ ຣາຍເວຢູ່ຕາມ ເມືອງຕ່າງໆເບິ່ງວ່າມີຣົຖຈັກຄັນປະຕິບັດຕາມຄວາມໄວທີ່ເຈົ້າໜ້າທີ່ໄດ້ຕິດປ້າຍໄວ້ຕາມແຄມທາງ? ສຳລັບທ່ານເດ່ມີຈັກເທື່ອທ່ານແລ່ນໄວກວ່າກຳໜົດ?

2. ຖາມ: ເຮົາຄິດວ່າເຮົາປະຕິບັດບັນຍັດຂອງພຣະເຈົ້າຢ່າງເຄັ່ງຄັດກັນທຸກຂໍ້ບໍ່? ເປັນຫຍັງບາງຄົນໃນພວກ ເຮົາຈຶ່ງກ້າເວົ້າວ່າປະຕິບັດທຸກຂໍ້? ແຕ່ຫລາຍເທື່ອເຮົາກໍກ້າສາຣະພາບວ່າເຮົາບໍ່ໄດ້ປະຕິບັດໝົດທຸກຂໍ້ ເມື່ອເຮົາເອງກໍບໍ່ໄດ້ປະຕິບັດເຖິງປານນັ້ນເຮົາກໍຍັງຕຳນິຄົນອື່ນຢູ່. ຄົນຢິວໄດ້ຄິດວ່າທຸກຄົນເປັນຄົນຜິດ ບາບຕໍ່ສາຍພຣະເນດຂອງພຣະເຈົ້າເວັ້ນໄວ້ແຕ່ຊົນຊາດຢິວເທົ່ານັ້ນ. ເຊັ່ນດຽວກັບຄົນນັບຖືສາສນາ ຕລອດເຖິງພວກຄຣິສຕຽນຕ່າງກໍຄິດວ່າຕົນເອງເປັນຄົນດີມີສິນທັມ ຈາກນັ້ນກໍມັກຈະເວົ້າໃຫ້ຄົນອື່ນໆ. "ເປັນຫຍັງທ່ານຈຶ່ງຫລຽວເຫັນຂີ້ເຫຼື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຂອງທ່ານ ບໍ່ຮູ້ສຶກ" (ມັດທາຍ 7:3)

3. ຂໍໃຫ້ນັກຮຽນຜູ້ນຶ່ງອ່ານໂຣມ 2:1-4. ຄຣູອາດຈະຂຽນດັ່ງຕໍ່ໄປນີ້ໃສ່ກະດານ (ຄຳຕອບແມ່ນຖືກໝົດ)

---ທ່ານເມີນເສີຍໃນພຣະກະຣຸນາຂອງພຣະເຈົ້າແມ່ນບໍ່?
---ທ່ານມີຄວາມຜິດເໝືອນກັນຄົນອື່ນໆທີ່ທ່ານຕ້ອງຕິເຂົາແມ່ນບ?
---ຄວາມອົດກັ້ນພຣະພິໂຣດຂອງພຣະເຈົ້າມີກຳໜົດເວລາແມ່ນບໍ່?
---ພຣະເຈົ້າບໍ່ລົງໂທດໃນເວລານີ້ບໍ່ໄດ້ໝາຍຄວາມວ່າພຣະເຈົ້າບໍ່ມີອຳນາດແມ່ນບໍ່?
---ພຣະກະຣຸນາຂອງພຣະເຈົ້າບໍ່ແມ່ນຊັກຊວນໃຫ້ເຮັດບາບແຕ່ເຊີນໃຫ້ຖີ້ມໃຈເກົ່າເອົາໃຈໃໝ່ແມ່ນບໍ່?

4. ຖາມນັກຮຽນໃຫ້ອອກຄຳເຫັນຕໍ່ໄປນີ້: ຜູ້ທີ່ອ້າງຕົນເອງວ່າເປັນຜູ້ເຊື່ອພຣະເຈົ້າແຕ່ຍັງບໍ່ປະຕິບັດ ແລ້ວແຖມຍັງຕ້ອງຕິຄົນອື່ນເປັນຕາໜ້າອາຍແນວໃດ?

5. ເຮົາໄດ້ໝິ່ນປະມາດພຣະເຈົ້າຢ່າງໃດເມື່ອເຮົາບໍ່ເປັນຄົນສັດຊື່ຕໍ່ຄວາມເຊື່ອຂອງເຮົາ? ເຊັ່ນມາໂບດ ແຕ່ຮ່າງກາຍ ແຕ່ສ່ວນຈິດໃຈຢູ່ທາງອື່ນ, ທຳຊົງເປັນຜູ້ທີ່ເຊື່ອແທ້ ບາດຢ່າງອອກໂບດແລ້ວເປັນແນວໃໝ່.

6. ເລົ່າເຣື່ອງ: ເຮົາຈະສັງເກດເຫັນພວກຜູ້ຮ້າຍເມື່ອຖືກຈັບໄດ້ມັກຈະໂຍນຄວາມຜິດໃສ່ຜູ້ອື່ນ ດັ່ງທີ່ເຮົາໄດ້ ຍິນເຣື່ອງຂອງອາດາມແລະເອວານັ້ນ. ເມື່ອພຣະເຈົ້າຖາມກໍຖິ້ມໂທດໃສ່ກັນຢູ່ຈົນໃນທີ່ສຸດກໍຍັງຖິ້ມໂທດ ໃສ່ພຣະເຈົ້າ ວ່າເປັນນຳຜູ້ຍິງທີ່ພຣະອົງເຈົ້າເອົາໃຫ້ຂ້ານ້ອຍນັ້ນແລ້ວ.

<u>ເລົ່າເຣື່ອງເດັກນ້ອຍເຂົ້າແກ້ງ:</u> ຫລາຍເທື່ອພວກອາຈານໄປຢຽມຢາມພວກຄົນໝຸ່ມທີ່ຫ້ອງຄຸມຂັງ ພວກເຂົາມັກຈະເວົ້າວ່າການທີ່ເປັນດັ່ງນີ້ກໍຍ້ອນ ພໍ່ແມ່ບໍ່ເບິ່ງ, ພໍ່ແມ່ບໍ່ມີເວລາໃຫ້ເມື່ອມີເຣື່ອງຢາກລົມນຳ, ພໍ່ແມ່ ມີແຕ່ຮ້າຍ, ບາງຄົນກໍເວົ້າວ່າໝູ່ຊວນໄປ ເຮົາເຫັນແລ້ວວ່າບໍ່ມີໃຜຈະຮັບຄວາມຜິດຂອງຕົນເອງມີແຕ່ຕິຜູ້ອື່ນ.

7. ຄຣູອະທິບາຍ ໂຣມ 2:-13 ຂຽນຄຳວ່າ "ພຣະເຈົ້າພິພາກສາຄົນຫລອກລວງ" Hipocrisy" ລະຖາມ ນັກຮຽນໃຫ້ຕອບຄຳຖາມນີ້:

- ຜົນປາກົດແກ່ຄົນທີ່ເວົ້າຍາກແລະບໍ່ຢາກກມກັບໃຈຈະເປັນແນວໃດ? (2:5)
- ພຣະເຈົ້າຕອບແທນຄົນທີ່ປະຕິບັດແຕ່ລະຄົນຢ່າງໃດ? (2:6-8)
- ການພິພາກສາຂອງພຣະເຈົ້າໃນຣະວ່າງຄົນຢິວແລະຄົນຕ່າງຊາດຈະມີຄວາມແຕກຕ່າງກັນຢ່າງໃດ? (2:9-11)
- ພຣະເຈົ້າສແດງການເລືອກໜ້າແນວໃດ? (2:11)
- ໃຜເປັນຄົນບໍຣິສຸດໃນສາຍພຣະເນດຂອງພຣະເຈົ້າ? (2:12-13)

8. ສລຸບເຣື່ອງການໄປຊ້ອງພຣະພັກພຣະເຈົ້າໂດຍໃຊ້ຄຳຖາມແລະຂໍ້ພຣະຄັມພີດັ່ງນີ້:

--- ຄວາມຊົ່ວຮ້າຍຂອງຄົນນອກສິນທັມ (1:18-20)

--- ຄົນສິນທັມ ທັງຄົນຢິວ ແລະຄົນຕ່າງຊາດ (2:1)

--- ຄົນຢິວ (2:9-11)

. ໃຫ້ຜູ້ນຶ່ງອ່ານໂຣມ 2:28-2. ຄົນຢິວໝາຍເຖິງຄົນທີ່ເປັນຄອບຄົວຂອງອົງພຣະຜູ້ເປັນເຈົ້າ, ເປັນທາ ຍາດຂອງພຣະອົງ ຊຶ່ງໂປໂລບອກຢ່າງລະອຽດໃນການເປັນຄອບຄົວຂອງພຣະອົງບໍ່ແມ່ນທາງນອກແຕ່ ແມ່ນທາງໃນ ທຸກສ່ວນພາຍໃນຈິດໃຈເປັນທີ່ພໍພຣະທັຍພຣະອົງນັ້ນແຫລະຄືຄົນຢິວ (ຄອບຄົວພຣະອົງແທ້). ການໄປໂບດ, ຮັບສິນບັບຕິສມາ, ເປັນສະມາຊິກຂອງໂບດ ຍັງບໍ່ພຽງພໍທີ່ຈະເປັນຄອບຄົວຂອງ ພຣະອົງ ດັ່ງນັ້ນເມື່ອມີຄວາມເຊື່ອໃນໃຈຜົນກໍຈະປາກົດອອກເຖິງການປະຕິບັດ.

10. ທ່ານເຄີຍຖືກໃຜຜູ້ນຶ່ງຈັບຄວາມຜິດທ່ານບໍ່? ຫລືຈື່ບໍ່ທີ່ມີຄົນຈັບຜິດທ່ານຄັ້ງທີ່ຜ່ານມາ? ທ່ານຮູ້ສຶກແນວ ໃດ? ເມື່ອທ່ານມີຄວາມຮູ້ສຶກແນວນັ້ນເປັນຫຍັງຈຶ່ງບໍ່ເຊົາຈັບຜິດຄົນອື່ນ ເພາະພຣະເຈົ້າຈະບໍ່ຈັບຜິດທ່ານ

<u>ບົດຮຽນທີ່ນຳໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

11. ເມື່ອເວລາທ່ານຍັງເປັນເດັກນ້ອຍຢູ່ທ່ານເປັນລູກທີ່ຟັງຄວາມພໍ່ແມ່ຫລາຍປານໃດ? ເມື່ອຟັງຄວາມພໍ່ແມ່ ແລ້ວເພິ່ນເຮັດຢ່າງໃດກັບທ່ານ? ດຽວນີ້ທ່ານເປັນພໍ່ແລະເປັນແມ່ແລ້ວ ຫາກລູກບໍ່ຟັງຄວາມ ທ່ານມີຄວາມຮູ້ສຶກແນວໃດ?

12. ຕໍ່ໄປທ່ານຈະເຮັດແນວໃດເພື່ອຈະປະຕິບັດຄຳສັ່ງສອນຂອງພຣະເຈົ້າເໝືອນດັ່ງທີ່ທ່ານຕັ້ງໃຈໄວ້ແລ້ວ? ມີສິ່ງໃດຂັດຂວາງທ່ານບໍ່ໃຫ້ປະຕິບັດຕາມຄວາມເຊື່ອຂອງທ່ານ. ຈາກນັ້ນຄຣູນຳພາປິດພາກຮຽນວັນນີ້.

**ຄຳແນະນຳສຳລັບຄຣູສອນ**

<u>ບັນຫາທີ່ແກ້ບໍ່ຕົກ</u>

<u>ບົດຮຽນທີ 4</u>

## <u>ພຣະເຈົ້າເປັນທາງນັ້ນ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 3:21--4:12

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 3:21--4:25

<u>ຈຸດສຳຄັນຂອງບົດຮຽນນີ້:</u> ບໍ່ມີໃຜສາມາດໜີພົ້ນຈາກການພິພາກສາລົງໂທດຍ້ອນເຮັດບາບ, ແຕ່ພຣະເຈົ້າໄດ້ບອກວ່ານອກຈາກເຊື່ອໄວ້ວາງໃນໃນພຣະເຢຊູແລ້ວຈະໄດ້ພົ້ນ

<u>ຄຳຖາມເພື່ອການສຳຣວດ:</u> ມີຄວາມເຊື່ອເທົ່ານັ້ນກໍແລ້ວບໍ່ ຫລືຍັງມີຫຍັງຈະຕ້ອງເຮັດອີກ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍໃຫ້ຮູ້ວ່ານອກຈາກເຊື່ອໃນພຣະເຢຊູແລ້ວຍັງມີສິ່ງໃດຈະຕ້ອງປະຕິບັດຫຍັງອີກແດ່?

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າໄປໃຊ້ໃນຊີວິດ</u> ( ໃຊ້ເວລາ 5 ນາທີ )

1. ຂໍໃຫ້ນັກຮຽນອອກຄວາມຄິດລັກສະນະຂອງບາງຄົນເຮັດໃຫ້ພຣະເຈົ້າພໍພຣະທັຍໂດຍການເຮັດວຽກງານຕ່າງໆ ເຊັ່ນ ສອນໂຮງຮຽນວັນອາທິດ, ອ້ອນວອນຕໍ່ໜ້າຝູງຊົນ, ຮ້ອງເພງສັຣເສີນ, ຮັບໃຊ້ໃນວັນອາທິດໃນພະແນກຕ່າງ, ຖວາຍຊັບສິນບັດເປັນຕົ້ນ. ມັນຄຸ້ມຄ່າບໍ່ທີ່ເຮັດຢ່າງນີ້ເປັນປະຈຳ?

2. ຊີ້ໃຫ້ນັກຮຽນເຫັນເຖິງໂຣມບົດ 1 ເຖິງບົດ 3 ທີ່ໂປໂລໄດ້ອະທິບາຍເຖິງຄົນທີ່ບໍ່ມີຄວາມຫວັງນັ້ນຍ້ອນບາບຂອງເຂົາເອງ. ໃນບົດຮຽນນີ້ໂປໂລໄດຊີ້ແຈງບອກວ່າພຣະເຈົ້າເປັນທາງແຫ່ງຄວາມພົ້ນຈາກຄວາມບາບ. ພຣະຄັມພີສອນໃຫ້ຮູ້ວ່າບໍ່ມີສິ່ງໃດທີ່ຈະເຮັດໃຫ້ພຣະເຈົ້າເຂົ້າຂ້າງຜູ້ໃດໂດຍການກະທຳໂດຍປາສຈາກຄວາມເຊື່ອ, ແຕ່ຈະໃຫ້ພຣະເຈົ້າພໍພຣະທັຍນັ້ນຄືໃຫ້ເຮົາວາງໃຈເຊື່ອແລະປະຕິບັດຕາມພຣະອົງເທົ່ານັ້ນ.

3. ຂໍໃຫ້ຜູ້ນຶ່ງອ່ານໂຣມ 3:21-26. ໃຫ້ນັກຮຽນສັງເກດຟັງເບິ່ງທາງແຫ່ງຄວາມຊອບທັມ. ຄຣູອາຈໃຊ້ຄຳຖາມດັ່ງນີ້:

- ອັນໃດເປັນທາງແຫ່ງຄວາມຊອບທັມ (3: 32 ) ຄຳຕອບແມ່ນ <u>ຄວາມເຊື່ອ.</u>
- ໂປໂລກ່າວເຖິງໃຜໃນຂໍ້ 22 ? (ຄຣູເບິ່ງ 3:9 ທັງຄົນຢິວແລະຄົນຕ່າງຊາດກໍສເມີກັນເປັນຄຳຕອບ)
- ທີ່ໂປໂລເວົ້າວ່າບໍ່ຕ່າງກັນມີຄວາມໝາຍຢ່າງໃດ? (ຄຣູກ່າວເຖິງ 3:23-24 ເປັນຄຳຕອບ)

4. ເຮົາເຮັດບໍ່ໄດ້ຕົວຢ່າງໃນ ພຣະທັມອົບພະຍົບ 20:1-17 ເປັນເຣື່ອງພຣະບັນຍັດຊຶ່ງຫລາຍຢ່າງເຮົາປະຕິບັດບໍ່ໄດ້,

ແລະອ້າງເຖິງ ຄາລາເຕັຽ 5:22-23 ເຣື່ອງໝາກຜົນຂອງພຣະວິນຍານ.

5. ໄຕ່ຕອງ: <u>ເປັນຄົນຊອບທັມ</u> ໃນສາຍພຣະເນດຂອງພຣະເຈົ້າໝາຍຄວາມວ່າແນວໃດ? ຄົນເຮົາໃນໂລກນີ້ອາຈເປັນຄົນຜິດແລະບໍ່ຜິດຕໍ່ກົດໝາຍແຕ່ຍັງຜິດຕໍ່ພຣະເຈົ້າຢູ່ ຄືເຮົາເປັນຄົນຜິດເພາະບາບຂອງເຮົາ. ພຣະທັມໂຣມ 3:4 ໄດ້ແປຄຳວ່າ ເປັນຄົນຊອບທັມ. ພຣະເຈົ້າຊົງຖືວ່າຄວາມບາບຂອງເຮົາເຮັດໃຫ້ເຮົາກາຍເປັນຄົນບໍ່ຊອບທັມຕໍ່ພຣະອົງ ແຕ່ພຣະເຈົ້າໄດ້ຈັດໃຫ້ພຣະບຸດຂອງພຣະອົງຄືພຣະເຢຊູຄຣິດໄວ້ເປັນຄ່າໄຖ່ແລະມີຊີວິດຝ່າຍຄວາມຊອບທັມ (1ເປໂຕ 2:24).

6. ເພື່ອຊ່ອຍໃຫ້ນັກຮຽນເຂົ້າໃຈເຣື່ອງການຊົງໄຖ່: ມີເດັກນ້ອຍຜູ້ນຶ່ງໄປຫລິ້ນນ້ຳທີ່ແຄມຫາດຊາຍໃກ້ບ້ານຂອງລາວງໄດ້ເອົາດິນຊາຍທີ່ປຽກຊຸ່ມມາກໍ່ເປັນຮູບຜາສາດຫລິ້ນຢູ່ຂ້າງງແມ່ຂອງລາວໄດ້ໃຊ້ຄຸນ້ອຍໄປຕັກເອົາດິນຊາຍຊຸ່ມໃນຣະຫວ່າງຫີນແຄມນ້ຳ ບັງເອີນລາວກໍຕັກເອົາຕຸ້ມຫູຄຳຊຶ່ງຜູ້ຍິງຄົນນຶ່ງໄດ້ເຮັດຕົກລົງນ້ຳໃນບໍ່ຫລາຍມື້ຜ່ານມານີ້ ຜູ້ຍິງຄົນນັ້ນກໍຮ້ອງຂຶ້ນດ້ວຍຄວາມດີໃຈແລະບອກວ່າແມ່ນຂອງຂ້ອຍຕົກລົງໃນນ້ຳສອງສາມມື້ຜ່ານມານີ້ແລະຂ້ອຍຍັງມີອີກຂ້າງນຶ່ງທີ່ເປັນຄູ່ກັນຢູ່ ແລະຜູ້ຍິງຄົນນັ້ນກໍຂໍໄຖ່ເອົາຄືນດ້ວຍຣາຄາແພງ. ການຊົງໄຖ່ໝາຍ ຄວາມວ່າຜູ້ທີ່ໄຖ່ເອົາເປັນເຈົ້າຂອງງຊິ້ນນັ້ນ ແຕ່ໄດ້ເສັຽຫາຍໄປຊົ່ວລະຍະນຶ່ງ. ເຮົາທັງຫລາຍເປັນຂອງພຣະເຈົ້າທີ່ເສັຽຫາຍໃນໂລກຈຶ່ງຖືກໄຖ່ໂດຍພຣະໂລຫິດແລະຊີວິດຂອງພຣະເຢຊູເຮົາຈຶ່ງກາຍເປັນຜູ້ບໍຣິສຸດເຊັ່ນນີ້.

7. ໃຫ້ຜູ້ນຶ່ງອ່ານ ໂຣມ 3:27-31. ຄຣູຖາມນັກຮຽນດັ່ງນີ້:

- ເຮົາທັງຫລາຍກາຍເປັນຄົນຊອບທັມດ້ວຍວິທີໃດ? ດ້ວຍທາງປະຕິບັດພຣະບັນຍັດຫລືດ້ວຍພຣະຄຸນທາງຄວາມເຊື່ອ?
- ໃນຣະຫວ່າງຄົນຮັບພິທີຕັດແລະບໍ່ຮັບພິທີຕັດແຕກຕ່າງກັນຢ່າງໃດ? ທັງສອງຈະຖືວ່າເປັນຄົນຊອບທັມຢ່າງໃດ?
- ຖ້າຢ່າງນັ້ນເຮົາມີຄວາມສັມພັນກັບພຣະບັນຍັດແນວໃດ? (3:31) ຄຣູອາທິບາຍ 4:1-12 ແມ່ນແຕ່ອັບຣາຮາມແລະເດວິດຍັງກາຍເປັນຄົນຊອບທັມໂດຍທາງຄວາມເຊື່ອບໍ່ແມ່ນຍ້ອນການປະຕິບັດກົດບັນຍັດ.

8. ໃຫ້ຜູ້ນຶ່ງອ່ານ 4:1-12. ໃຫ້ນັກຮຽນສັງເກດເບິ່ງອັບຣາຮາມກາຍເປັນຄົນຊອບທັມ. ຊຶ່ງໝາຍຄວາມວ່າອັບຣາຮາມກາຍເປັນຄົນຍິວ (ຄອບຄົວຂອງພຣະເຈົ້າ) ໂດຍທາງຄວາມເຊື່ອແລະເຮັດຕາມພຣະດຳຣັດຂອງພຣະເຈົ້າ. ເດວິດໄດ້ກ່າວເຖິງຄວາມສຸກຂອງຄົນທີ່ພຣະເຈົ້າໄດ້ຊົງໂຜດຖືວ່າເປັນຄົນຊອບທັມໂດຍທາງຄວາມເຊື່ອ (4:6 ).

9. ສລຸບໂຣມ 4:1-12 ຖາມນັກຮຽນແມ່ນເຫດຜົນອັນໃດທີ່ໂປໂລເລືອກເອົາອັບຣາຮາມມາເປັນຕົວຢ່າງຂອງຄວາມເຊື່ອທີ່ຄຣູຂຽນຢູ່ກະດານນີ້:

--- ໂປໂລໄດ້ເນັ້ນໜັກເຣື່ອງຄວາມລອດພົ້ນໄດ້ມາເຖິງຄົນຍິວແລະຄົນຕ່າງຊາດດ້ວຍ.
--- ໂປໂລກ່າວວ່າຄວາມເຊື່ອເປັນສູນກາງນຳໃຫ້ເຮົາກາຍເປັນຄົນຊອບທັມ.
--- ໃນເມື່ອພຣະຄັມພີສອນຄວາມລອດພົ້ນມີມາດ້ວຍຄວາມເຊື່ອດັ່ງນັ້ນຄວາມເຊື່ອຈຶ່ງສຳຄັນຫລາຍ.
--- ຫາກຄົນເຮົາສາມາດຮູ້ຈັກກັບພຣະເຈົ້າໂດຍການປະຕິບັດຢ່າງດຽວແລ້ວຄຣິສຕຽນເຮົາກໍບໍ່ມີຄວາມໝາຍ.

<u>ບົດຮຽນທີ່ນຳໄປໃຊ້ໃນຊີວິດ</u> ( ໃຊ້ເວລາ 15 ນາທີ)

10. ໃຫ້ນັກຮຽນອອກຄຳເຫັນໃນຄຳເວົ້ານີ້: ເປັນຄົນຊອບທັມຕໍ່ພຣະພັກຂອງພຣະເຈົ້າຄືເຮົາທັງຫລາຍໄດ້ເຊື່ອໃນອົງພຣະເຢຊູຄຣິດທີ່ຊົງຕາຍເພື່ອໄຖ່ເຮົາແລະລຶບລ້າງຄວາມບາບຂອງເຮົາທັງສິ້ນ.

11. ອ່ານ ໂຣມ 4:7-8, ທີ່ມາຈາກເພງສັຣເສີນ 32:1-2. ຖາມນັກຮຽນ ພຣະພອນອັນໃດທີ່ໂປໂລໄດ້ເວົ້າເຖິງ? (ຄຳຕອບ: ການອະພັຍໂທດຄວາມຜິດບາບ ແລະຣາງວັນ) ບອກນັກຮຽນຮູ້ອີກວ່າ ເມື່ອເຮົາສາລະພາບຄວາມຜິດບາບພຣະອົງກໍຊົງສັດຊື່ແລະທ່ຽງທັມເປີດປະຕູຕ້ອນຮັບເອົາເຮົາ. ການໃຫ້ອາພັຍເປັນການເລີ້ມຕົ້ນຂອງຄວາມສຸກແລະຜູກພັນກັບພຣະອົງໄດ້. ພຣະພອນອັນນີ້ມີໃຫ້ແກ່ທຸກຄົນໂດຍທາງຄວາມເຊື່ອໃນພຣະເຈົ້າ.

12. ເຊີນນັກຮຽນທຸກຄົນກົ້ມຫົວຫລັບຕາອ້ອນວອນ ຄຣູນຳພານັກຮຽນສາລະພາບຄວາມຜິດບາບແຕ່ລະຄົນເພື່ອພຣະເຈົ້າຈະອວຍພຣະພອນ.

## **ຄຳແນະນຳສຳລັບຄູສອນ**

<u>ບົດຮຽນທີ 5</u>

ຈົ່ງຊົມຊື່ນຍິນດີ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>ໂ ຣມ : 1-11

<u>ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:</u> 5:1-11

<u>ຈຸດສຳຄັນຂອງບົດຮຽນນີ້:</u>ພຣະເຈົ້າຊົງໃຫ້ພວກເຮົາຄືນດີກັບພຣະອົງຜ່ານທາງຄວາມເຊື່ອ; ພວກເຮົາສາມາດຊົມຊື່ນຍິນດີໃນຄວາມສັມພັນອັນໃຫມ່ນີ້ກັບພຣະອົງໃນປັດຈຸບັນ ແລະຕະລອດໄປ

<u>ຄຳຖາມເພື່ອການສຳຣວດ:</u> ການເປັນຄຣິສຕຽນມີຫຍັງດີແດ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ອະທິບາຍຜົນປໂຍດຂອງການຄືນດີກັບພຣະເຈົ້າເພາະຄວາມເຊື່ອ

### <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> ( 5 ນາທີ)

1. ໃຫ້ແຕ່ລະຄົນອອກຄວາມເຫັນວ່າ ມີຫຍັງແດ່ທີ່ເຮັດໃຫ້ຄົນມີຄວາມຊົມຊື່ນຍິນດີ? ຂຽນຄວາມຄິດຂອງແຕ່ລະຄົນໃສ່ກະດານ; ຫຼັງຈາກທຸກຄົນໃຫ້ຄວາມຄິດເຫັນແລ້ວ ໃຊ້ເວລາສົນທະນາແຕ່ລະຢ່າງ; ຂີດເສັ້ນຫມາຍທຸກຢ່າງທີ່ເປັນຂອງຊົ່ວຄາວ.

2. ບອກຫົວຂໍ້ຂອງບົດຮຽນທີ່ຈະຮຽນໃນພາກຕໍ່ໄປ; ເວົ້າເຣື່ອງເຫດຜົນ 3 ຢ່າງທີ່ເຮັດໃຫ້ຄຣິສຕຽນສາມາດມີຄວາມຍິນດີ.

3. ເບິ່ງຄວາມຄິດເຫັນທີ່ຂຽນໄວ້ໃນກະດານແລ້ວຖາມນັກຮຽນວ່າ "ຄວາມຊົມຊື່ນຍິນດີທີ່ແທ້ຈິງແມ່ນຫຍັງ?" ອະທິບາຍວ່າ ຄວາມສຳເຣັດຂອງມະນຸດບໍ່ສາມາດໃຫ້ຄວາມຊົມຊື່ນຍິນດີທີ່ຫມັ້ນຄົງ

<u>ນຳພາການສຶກສາພຣະທັມ</u>(30 ນາທີ)

4. ຂຽນຫົວຂໍ້ບົດຮຽນໃສ່ກະດານແລ້ວຂຽນຄວາມສຳຄັນລົງ, ປ່ອຍບ່ອນໄວ້ສຳລັບຄຳອະທິບາຍ; ເບິ່ງຕາມຕົວຢ່າງລຸ່ມນີ້:

    ກ. ຊົມຊື່ນຍິນດີໃນສັນຕິສຸກກັບພຣະເຈົ້າ (5:1-2)
    - ການຊົງຖືວ່າເປັນຄົນຊອບທັມ
    - ຄວາມສັນຕິສຸກ
    - ຄວາມຫວັງ

    ຂ. ຊົມຊື່ນຍິນດີໃນຄວາມຫວັງເມື່ອມີຄວາມຍາກລຳບາກ (5:3-8)
    - ຄວາມອົດທົນ
    - ຄຸນນະວຸດທິ
    - ຄວາມຫວັງ

ຄ. ຊົມຊື່ນຍິນດີໃນຄວາມແນ່ໃຈເຣື່ອງຄວາມລອດພົ້ນ

ການເຮັດໃຫ້ຄືນດີ

ຊີວິດ

ຄວາມລອດພົ້ນ

*ໃຫ້ໃຊ້ຄຳອະທິບາຍໃນບົດຮຽນເພື່ອຊ່ວຍໃນການບັລຍາຍແຕ່ລະຂໍ້.

<u>ນຳບົດຮຽນໄປໃຊ້ກັບຊີວິດ</u> (15 ນາທີ)

5. ໃຫ້ຄົນນຶ່ງທີ່ເຄີຍພົບຄວາມລຳບາກໃນຊີວິດແບ່ງປັນປະສົບການກັບເພື່ອນນັກຮຽນ. ອະທິບາຍວ່າມີຫຼາຍຄັ້ງພວກເຮົາໄດ້ເຫັນການທຳງານຂອງພຣະເຈົ້າເວລາເຮົາມີບັນຫາ. ບັນຫາຊ່ວຍໃຫ້ເຮົາມີຄວາມເຂັ້ມແຂງ.

6. ໃຫ້ແຕ່ລະຄົນອອກຄວາມຄິດເຫັນວ່າ ຄຣິສຕຽນມີຫຍັງແດ່ຊ່ວຍເຂົາເຈົ້າເວລາເກີດບັນຫາ?

7. ຊວນໃຫ້ນັກຮຽນອະທິຖານເພື່ອຜູ້ທີ່ເຂົາເຈົ້າຮູ້ ທີ່ກຳລັງມີບັນຫາໃນຊີວິດ.

8. ເນັ້ນຄືນໃສ່ <u>ຄຳຖາມເພື່ອການສຳຣວດ</u> ທີ່ວ່າ: ການເປັນຄຣິສຕຽນມີຫຍັງດີແດ່? ໃຫ້ເວລານັກຮຽນເລັກນ້ອຍເພື່ອຕອບຄຳຖາມ.

9. ປິດການຮຽນດ້ວຍການອະທິຖານເພື່ອເພື່ອນນັກຮຽນຜູ້ທີ່ກຳລັງມີບັນຫາໃນຊີວິດ.

## **ຄໍາແນະນໍາສໍາລັບຄູສອນ**

<u>ບົດຮຽນທີ 6</u>

ຈົ່ງຮັບເອົາອິສຣະພາບ!

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>ໂຣມ 6:1-14, 20-23

<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ໂຣມ 6

<u>ຈຸດສໍາຄັນຂອງບົດຮຽນນີ້:</u>ຄຣິສຕຽນຄວນດໍາເນີນຊີວິດທີ່ປາສະຈາກການເປັນທາດຂອງຄວາມຜິດບາບ ເພາະພຣະເຈົ້າໄດ້ຊົງໃຫ້ເສຣີພາບແກ່ເຂົາເຈົ້າແລ້ວໃນພຣະຄຣິດ

<u>ຄໍາຖາມເພື່ອການສໍາຣວດ:</u> ຄວາມເຊື່ອໄດ້ຊ່ວຍທ່ານໃຫ້ໃຊ້ຊີວິດເພື່ອຖວາຍກຽດແກ່ພຣະເຈົ້າແນວໃດແດ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ສໍາຣວດເບິ່ງເສຣີພາບຂອງທ່ານ,ຈາກການເປັນທາດຂອງຄວາມຜິດບາບ, ແລະ ຄວາມພະຍາຍາມທີ່ຈະໃຊ້ຊີວິດເພື່ອຖວາຍກຽດແກ່ພຣະເຈົ້າ

### <u>ແຜນສໍາລັບການສອນ</u>

<u>ນໍາເຣື່ອງເຂົ້າສູ່ຊີວິດຈິງ</u> ( 5 ນາທີ)

ກ່ອນເວລາຮຽນໃຫ້ຂຽນ "ອິສຣະພາບ" ໄວ້ກະດານ; ແລ້ວຂຽນຫົວຂໍ້ຕ່າງໆລົງຕາມຕົວຢ່າງນີ້:

"ອິສຣະພາບ"

- ເລີ້ມຕົ້ນຈາກຊີວິດໃຫມ່ໃນພຣະຄິດ (6:1-7)
- ເພີ້ມຂື້ນເມື່ອເຮົາເຕີບໃຫຍ່ໃນພຣະຄຣິດ (6:8-14)
- ມີຜົນສໍາລັບຊີວິດນິຣັນໃນພຣະຄຣິດ (6:20-23)

1. ຖາມນັກຮຽນວ່າ, ຕາມທີ່ພວກເຮົາເຄີຍໄດ້ຍິນມາ ມີຫຍັງແດ່ທີ່ຄຣິສຕຽນເຮັດໄດ້ ແລະ ມີຫຍັງແດ່ທີ່ຄຣິສຕຽນເຮັດບໍ່ໄດ້; ຂຽນຄໍາຕອບໃສ່ກະດານໂດຍແບ່ງເປັນສອງພາກສ່ວນຄື "ເຮັດໄດ້" ແລະ ເຮັດບໍ່ໄດ້." ເປີດໂອກາດໃນການໃຫ້ຄໍາເຫັນເລັກນ້ອຍ.
2. ທົບທວນ ເຣື່ອງຄວາມຊົມຊື່ນຍິນດີ ໃນບົດຮຽນທີ່ຜ່ານມາ. ຖາມນັກຮຽນວ່າມີໃຜແດ່ທີ່ໄດ້ແບ່ງປັນຄວາມຊົມຊື່ນຍິນດີໃຫ້ກັບຄົນອື່ນໆ. ແນະນໍາຕໍ່ໄປວ່າໃນມື້ນີ້ ພວກເຮົາຈະຮຽນຮູ້ເຣື່ອງການເປັນອິສຣະພາບຈາກກົດລະບຽບແລະປະເພນີທີ່ມະນຸດສ້າງຂື້ນ. ເຕືອນນັກຮຽນວ່າພຣະທັມຂອງພຣະເຈົ້າຄືເຂັມຊີ້ທິດທາງໃນການປະຕິບັດຄວາມເຊື່ອ.

<u>ນໍາພາການສຶກສາພຣະທັມ</u>(30 ນາທີ)

3. ອະທິບາຍ ບົດຮຽນຫົວຂໍ້ <u>ເສຣີພາບເລີ້ມຕົ້ນຈາກຊີວິດໃຫມ່ໃນພຣະຄຣິດ (6:1-7)</u>.ໃຊ້ຄໍາບັລຍາຍໃນບົດຮຽນເພື່ອຊ່ວຍໃນການອະທິບາຍ; ຖາມນັກຮຽນວ່າ, ເຮົາຄວນຈະໃຊ້ຊີວິດໃນຄວາມບາບຕໍ່ໄປບໍ່ ຫຼັງຈາກທີ່ເຮົາເປັນຄຣິສຕຽນແລ້ວ?
4. ຂໍໃຫ້ນັກຮຽນຄົນນື່ງອະທິຍາຍເຣື່ອງການບັບຕິສະມາ; ອີກຄົນນື່ງໃຫ້ອະທິບາຍສັນຍາລັກຂອງການບັບຕິສະມາ. ຫຼັງຈາກນັ້ນອະທິບາຍເພີ້ມເຕີມເພື່ອຊ່ວຍໃຫ້ແຕ່ລະຄົນເຂົ້າໃຈຄວາມຫມາຍຂອງການບັບຕິສະມາ.
5. ອ່ານ 6:5-7, ແລ້ວບອກທຸກຄົນວ່າ, ຄຣິສຕຽນບໍ່ໄດ້ເປັນທາດຂອງຄວາມບາບອີກຕໍ່ໄປ; ຄຣິສຕຽນມີເສຣີພາບທີ່ຈະຕິດຕາມນາຍຄົນໃຫມ່ຄືອົງພຣະຄຣິດ.

6. ອະທິບາຍບົດຮຽນໃນຫົວຂໍ້ <u>ເສຣີພາບຈະເພີ້ມຂຶ້ນເມື່ອເຮົາເຕີບໃຫຍ່ໃນພຣະຄຣິດ (6:8-14)</u>
7. ຖາມ, ການກະທຳຄວາມດີມີສ່ວນຫຍັງກ່ຽວກັບຄວາມລອດພົ້ນ? ເຕືອນທຸກຄົນວ່າ, ຄວາມພົ້ນໄດ້ມາ ເພາະຄວາມເຊື່ອ ແລະ ການກະທຳຄວາມດີຈະຕິດຕາມຄວາມພົ້ນ.
8. ອ່ານ 6:8-14; ຖາມ, ການຕາຍຕໍ່ຄວາມຜິດບາບ ແລະ ມີຊີວິດໃນພຣະເຢຊູຄຣິດ ຫມາຍເຖິງຫຍັງ? ອະທິບາຍການມີສ່ວນໃນການຊົງຄືນພຣະຊົນຂອງພຣະຄຣິດ ແລະ ການດຳເນີນຊີວິດໃຫ້ຖືກຕ້ອງ.
9. ໂຣມ 6:14 ໃຫ້ຄວາມຫມັ້ນໃຈກັບຄຣິສຕຽນຢ່າງໃດ?
10. ອ່ານ ແລະ ອະທິບາຍບົດຮຽນໃນຫົວຂໍ້ <u>ເສຣີພາບມີຜົນສຳລັບຊີວິດນິຣັນ (6:20-23)</u>; ໃຊ້ຄຳບັລຍາຍໃນບົດຮຽນເພື່ອຊ່ວຍໃນການອະທິບາຍ. ອະທິບາຍຄວາມແຕກຕ່າງກັນລະຫວ່າງ ຄ່າຈ້າງຂອງຄວາມບາບ ແລະ ຄ່າຈ້າງຂອງຄວາມເຊື່ອ.

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (15 ນາທີ)

11. ເວົ້າເຣື່ອງວຽກງານບາງຢ່າງທີ່ທາງຄຣິສຕະຈັກ ຫຼື ສະມາຄົມກຳລັງເຮັດຢູ່; ໂດຍສະເພາະແລ້ວແມ່ນກ່ຽວກັບການຮັບໃຊ້ຄວາມຕ້ອງການຂອງເພື່ອນມະນຸດ ທີ່ເພື່ອນນັກຮຽນທັງຫຼາຍສາມາດມີສ່ວນຮ່ວມ (ທ່ານອາດຈະໄດ້ຄົ້ນຄວ້າເຣື່ອງນີ້ລ່ວງຫນ້າ ກ່ອນການສຶກສາບົດຮຽນ).

**ຄຳແນະນຳສຳລັບຄູສອນ**

<u>ບົດຮຽນທີ 7</u>

ໃຊ້ຊີວິດຢ່າງມີຊັຍຊະນະ!

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 8:1-2, 12-28, 38-39

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 7-8

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເວລາໃດເຮົາໃຫ້ພຣະວິນຍານຂອງພຣະເຈົ້ານຳພາຊີວິດ, ພວກເຮົາຈະມີຊັຍຊະນະຕໍ່ບັນຫາຕ່າງໆໃນຊີວິດ

<u>ຄຳຖາມເພື່ອການສຳຣວດ:</u> ເຮົາຈະດຳເນີນຊີວິດຢ່າງມີຊັຍຊະນະເວລາເຮົາມີຄວາມຍາກລຳບາກໄດ້ແນວໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ສຳຣວດເບິ່ງຜົນຂອງການໃຫ້ພຣະວິນຍານຂອງພຣະເຈົ້ານຳພາຊີວິດ ແລ້ວຕັດສິນໃຈເອງວ່າທ່ານຈະເລືອກທາງໃດ

<u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> ( 5 ນາທີ)

1. ຊອກເຣື່ອງໃນໜັງສືພິມ ກ່ຽວກັບຄົນທີ່ໄດ້ຮັບຊັຍຊະນະຫຼັງຈາກການຕໍ່ສູ້ເປັນເວລາດົນນານ, ເຊັ່ນ ການຕໍ່ສູ້ກັບຄວາມທຸກລຳບາກ, ການຕໍ່ສູ້ຄວາມເຈັບປ່ວຍ, ຫຼື ການຕໍ່ສູ້ຄະດີ.
2. ເວົ້າເຣື່ອງຫົວຂໍ້ບົດຮຽນທີ່ຈະສຶກສາຕໍ່ໄປ; ເນັ້ນວ່າ, ຖ້າພວກເຮົາມອບໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້ານຳພາຊີວິດພວກເຮົາຈະໄດ້ຊັຍຊະນະກັບບັນຫາຕ່າງໆ ໃນຊີວິດ.

<u>ນຳພາການສຶກສາພຣະທັມ</u> (30 ນາທີ)

3. ອະທິບາຍພຣະທັມ ໂຣມ 7:7-25 ໃນຫົວເຣື່ອງ, <u>ຄວາມຜິດບາບຍັງຕິດຕາມຄຣິສຕຽນທຸກຄົນ (7:7-25)</u> ໂດຍ ໃຊ້ຄຳບັນລະຍາຍຈາກບົດຮຽນ.
4. ຂຽນຫົວເຣື່ອງນີ້ໃສ່ກະດານ (ຖ້າບໍ່ມີບ່ອນພໍ ໃຫ້ຂຽນເທື່ອລະອັນ):
   - ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດ (8:1-2)
   - ພຣະເຈົ້າຊົງໃຫ້ເຮົາເປັນຜູ້ຮັບມໍຣະດົກ (8:12-17)
   - ພຣະເຈົ້າຊົງຮັບປະກັນອະນາຄົດຂອງພວກເຮົາ (8:22-28)
   - ພຣະເຈົ້າຊົງເຮັດໃຫ້ຄວາມພົ້ນຂອງເຮົາເປັນສິ່ງແນ່ນອນ (8:38-39)
5. ເບິ່ງຫົວຂໍ້ <u>ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດ (8:1-2)</u>; ອ່ານພຣະທັມ; ໃຫ້ຄົນນຶ່ງອະທິບາຍເຣື່ອງ "ພຣະວິນຍານແຫ່ງຊີວິດ," ແລະໃຫ້ອີກຄົນນຶ່ງເວົ້າເຣື່ອງ "ກົດຂອງຄວາມຕາຍ."
6. ບັລຍາຍຂໍ້ຄວາມທີ່ວ່າ "ບັດນີ້ການລົງໂທດຈຶ່ງບໍ່ມີ." ເນັ້ນເຣື່ອງ ພຣະເຢຊູໄດ້ໄຖ່ຄວາມຜິດບາບຂອງພວກເຮົາ; ຄວາມຜິດຕ່າງໆໄດ້ຮັບການໃຫ້ອະພັຍແລ້ວ; ພຣະໂລຫິດຂອງພຣະເຢຊູໄດ້ປົກຄວາມຜິດຂອງພວກເຮົາໄວ້ແລ້ວ.
7. ສຶກສາພາກຕໍ່ໄປໃນຫົວຂໍ້ <u>ພຣະເຈົ້າຊົງໃຫ້ພວກເຮົາເປັນລູກ ແລະເປັນຜູ້ຮັບມໍຣະດົກ (8:12-16)</u>. ຖາມ, ການເປັນຜູ້ຮັບມໍຣະດົກ ຫຼື ການເປັນລູກຂອງພຣະເຈົ້າມີຄວາມໝາຍແນວໃດ? ສົນທະນາເຣື່ອງສິດທິ ແລະ ຄວາມຮັບຜິດຊອບ.

8. ອະທິບາຍພຣະທັມ ໂຣມ 8:18-28; ໃຊ້ຄຳບັລຍາຍໃນຫົວເຣື່ອງ, <u>ພຣະເຈົ້າຊົງຮັບປະກັນອະນາຄົດຂອງພວກເຮົາ</u>.

9. ເບິ່ງພຣະທັມ ໂຣມ 8:28; ເຕືອນນັກຮຽນວ່າ:
   - ກິຈການຂອງພຣະເຈົ້າແມ່ນເພື່ອ ພຣະປະສົງຂອງພຣະອົງ
   - ພຣະທັມຂໍ້ນີ້ບໍ່ໄດ້ບອກວ່າ ທຸກຢ່າງທີ່ເກີດຂຶ້ນດີໝົດ
   - ພຣະເຈົ້າຊົງຮິບໂຮມທຸກຢ່າງທີ່ເກີດຂຶ້ນກັບເຮົາ ແລ້ວສ້າງສິ່ງທີ່ດີຂຶ້ນ

10. ໃຫ້ນັກຮຽນຄົນນຶ່ງອ່ານ 8:38-39; ໃຊ້ຄຳບັລຍາຍໃນຫົວເຣື່ອງ, <u>ພຣະເຈົ້າຊົງເຮັດໃຫ້ຄວາມພົ້ນຂອງເຮົາເປັນສິ່ງແນ່ນອນ (8:38-39)</u>. ອະທິບາຍເຣື່ອງຄວາມເຊື່ອຂອງຄະນະບັບຕິດ ກ່ຽວກັບຄວາມໝັ້ນຄົງຂອງຜູ້ທີ່ເຊື່ອ. ເນັ້ນເຣື່ອງ, ບໍ່ມີສິ່ງໃດຈະສາມາດແຍກພວກເຮົາອອກຈາກຄວາມຮັກຂອງພຣະເຈົ້າ.

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (15 ນາທີ)

11. ສລຸບເຣື່ອງພຣະພອນ ແລະ ຄວາມຮັບຜິດຊອບຂອງຊີວິດທີ່ຢູ່ໃຕ້ການນຳພາຂອງພຣະວິນຍານ.

12. ໃຫ້ແຕ່ລະຄົນສະແດງຄວາມຮູ້ສຶກສ່ວນຕົວໃນເຣື່ອງ:
   - ການໄດ້ເປັນລູກຂອງພຣະເຈົ້າ
   - ທຸກຢ່າງເກີດຂຶ້ນເພື່ອຜົນດີໃນຊີວິດຂອງເຂົາ
   - ຄວາມໝັ້ນຄົງຂອງເຂົາໃນພຣະຄຣິດ

13. ອະທິຖານປິດດ້ວຍການຂໍໃຫ້ພຣະວິນຍານຊົງນຳພາ; ຂອບຄຸນພຣະເຈົ້າທີ່ໄດ້ຮັບພວກເຮົາໃຫ້ເປັນລູກ, ທີ່ພຣະອົງຊົງທຳງານເພື່ອຜົນດີໃນຊີວິດຂອງພວກເຮົາ, ທີ່ໃຫ້ພວກເຮົາໄດ້ມີຄວາມໝັ້ນຄົງຢູ່ໃນພຣະຄຣິດ.

## <u>ຄຳແນະນຳສຳລັບຄູສອນ</u>

### <u>ບົດຮຽນທີ 8</u>

### ການຊົງເລືອກຂອງພຣະເຈົ້າ ແລະ ຄວາມຮັບຜິດຊອບຂອງເຮົາ!

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 9:1-8; 10:1-21

<u>ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 9:1-10:21

<u>ຈຸດສຳຄັນຂອງບົດຮຽນນີ້:</u> ທຸກຄົນມີໜ້າທີ່ໃນການຮັບເອົາຂ່າວປະເສີດ ແລະໃນການປະກາດຂ່າວປະເສີດ ເພາະພຣະເຈົ້າໄດ້ຊົງເລືອກແຕ່ລະຄົນໄວ້.

<u>ຄຳຖາມເພື່ອການສຳຣວດ:</u> ມະນຸດມີຄວາມຮັບຜິດຊອບແນວໃດ ເມື່ອເຂົາໄດ້ຍິນຂ່າວປະເສີດເຣື່ອງຄວາມລອດພົ້ນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເບິ່ງຄຳອະທິບາຍຂອງ ໂປໂລໃນເຣື່ອງອຳນາດຂອງພຣະເຈົ້າ ແລະຄວາມຮັບຜິດຊອບຂອງມະນຸດຕໍ່ພຣະເຈົ້າ.

### <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> ( 5 ນາທີ)

1. ຖາມ, ມີຫຍັງແດ່ທີ່ເຮົາຕ້ອງໄດ້ເລືອກແຕ່ລະມື້? ໃຫ້ເວລາເພື່ອຕອບ. ຖາມ, ມີຫຍັງແດ່ທີ່ເກີດຂຶ້ນ ແລະພວກເຮົາເລືອກບໍ່ໄດ້?
2. ບອກຫົວເຣື່ອງຂອງ 2 ບົດຮຽນທີ່ຈະສຶກສາໃນອານາຄົດ; ເວົ້າໂດຍຫຍໍ້, ບົດຮຽນທີ່ຈະສຶກສາໃນມື້ນີ້ ແມ່ນເຣື່ອງ ການຊົງເລືອກຂອງພຣະເຈົ້າ ແລະ ຄວາມຮັບຜິດຊອບຂອງມະນຸດ ຊຶ່ງເປັນເຣື່ອງທີ່ຍັງເຮັດໃຫ້ຄົນເຂົ້າໃຈຜິດຈົນເຖິງທຸກວັນນີ້.

<u>ນຳພາການສຶກສາພຣະທັມ</u> (30 ນາທີ)

3. ທົບທວນຫົວເຣື່ອງໃຫຍ່ໆໃນພຣະທັມໂຣມ ຕາມຫົວຂໍ້ຕໍ່ໄປນີ້:
   - ໂຣມບົດທີ 1-8 - ຫຼັກຄວາມເຊື່ອ
   - ໂຣມບົດທີ 9-11 - ພຣະປະສົງຂອງພຣະເຈົ້າສຳລັບຊາວຢິວ ແລະຄົນຕ່າງຊາດ
   - ໂຣມບົດທີ 12-16 - ເຣື່ອງກິຣິຍາມາຣະຍາດ ແລະ ການປະພຶດ

   ບອກນັກຮຽນ, ໂຣມ 9-11 ທີ່ຈະສຶກສາໃນມື້ນີ້ຈະເວົ້າເຣື່ອງຊົນຊາດຢິວຊຶ່ງເປັນຊາດທີ່ພຣະເຈົ້າຊົງເລືອກ ພາກັນປະຕິເສດ ພຣະເຢຊູຄຣິດ ຊຶ່ງເປັນພຣະຜູ້ໂຜດ.
4. ອ່ານ ໂຣມ 9:1-8, ຖາມ ແລະສົນທະນາ ເຣື່ອງຕໍ່ໄປນີ້:
   - ທ່ານຮູ້ສຶກແນວໃດກັບ ໝູ່ ແລະ ຍາດພີ່ນ້ອງທີ່ຍັງບໍ່ໄດ້ເປັນຄຣິສຕຽນ?
   - ເປັນຫຍັງ ໂປໂລ ຈຶ່ງມີຄວາມຮູ້ສຶກຕາມທີ່ເຂົາບັນລະຍາຍຢູ່ໃນ 9:1-3 ?
5. ອ່ານ 9:4-5, ສົນທະນາ ສິດທິ ຕ່າງໆ ຂອງຊົນຊາດຢິວ; ເວົ້າເຣື່ອງພຣະປະສົງຂອງພຣະເຈົ້າ ສຳລັບຊາດຢິວ (ຊຶ່ງເປັນຜູ້ຊົງເລືອກໄວ້ເພື່ອຈະນຳຂ່າວປະເສີດໄປເຖິງຄົນທົ່ວໂລກ)
6. ເວົ້າເຣື່ອງການຊົງເລືອກເຊື້ອສາຍຂອງ ອາບຣາຮາມໃນ 9:4-8.
7. ອ່ານ 9:30-33; ໃຊ້ຄຳອະທິບາຍໃນຫົວຂໍ້ <u>ການຊົງເລືອກຂອງພຣະເຈົ້າ (ໂຣມ 9:1-8)</u> ເພື່ອສລຸບ

ຄຳເຫັນຂອງ ໂປໂລທີ່ວ່າ ພຣະເຈົ້າຊົງເລືອກຄົນຕ່າງຊາດເພາະຄວາມເຊື່ອ ແລະພຣະອົງປະຕິເສດ ຊາວຢິວ ເພາະພວກເຂົາພະຍາຍາມເຂົ້າຫາພຣະເຈົ້າດ້ວຍການປະຕິບັດພຣະບັນຍັດ.

8. ບັລຍາຍເຣື່ອງ <u>ຄວາມຮັບຜິດຊອບຂອງມະນຸດ</u>.
9. ອ່ານ 10:1-4; ຖາມ, ຄວາມເຊື່ອຂອງຊາວຢິວມີຫຍັງຜິດ? (ເຂົາບໍ່ຍອມເຮັດຕາມແນວທາງຂອງ ພຣະເຈົ້າເພື່ອຈະໄດ້ຄວາມຊອບທັມ).
10. ໃຫ້ຄົນນຶ່ງອ່ານ 10:5-21; ຊີ້ບອກວ່າ ຊົນຊາດຢິວໄດ້ມີໂອກາດ ຟັງ, ເຂົ້າໃຈ, ແລະຕອບສນອງ ເຣື່ອງຂ່າວປະເສີດ (10:18-19).
11. ອ່ານ 10:9-10; ບອກເຣື່ອງບາດກ້າວຂອງຄວາມເຊື່ອສາມຢ່າງ: ສາຣະພາບບາບ, ຍອມເຊື່ອ, ແລະ ຮັບຄວາມພົ້ນ.
12. ຊີ້ໃຫ້ເຫັນວ່າ 10:14-15 ຄືຄຳສັ່ງເຣື່ອງການປະກາດສຳລັບຄຣິສຕຽນ ແລະສຳລັບຄຣິສຕະຈັກ.

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (15 ນາທີ)

13. ໃຊ້ຄຳຖາມ ຢູ່ຕອນສຸດທ້າຍຂອງບົດຮຽນເພື່ອຊວນໃຫ້ທຸກຄົນຄິດ.
14. ອະທິຖານເພື່ອຜູ້ທີ່ຍັງບໍ່ຮູ້ພຣະເຈົ້າ (ທີ່ພວກນັກຮຽນຮູ້ຈັກ; ຊັກຊວນທຸກຄົນໃຫ້ມີສ່ວນນຳການ ຖວາຍ), ເພື່ອການມີສ່ວນຮ່ວມໃນການຖວາຍສຳລັບພາຣະກິດໃນເທັກຊັດ ຂອງ ແມຣີ ຮິນ ເດວິດ ອອບເຟີຮິ້ງ.
15. ອະທິຖານປິດ ດ້ວຍການຂອບພຣະຄຸນພຣະເຈົ້າທີ່ຊົງປະທານພຣະບຸດເພື່ອຄວາມພົ້ນຂອງພວກເຮົາ.

**ຄໍາແນະນໍາສໍາລັບຄູສອນ**

ບົດຮຽນທີ 9

ຄວາມເມດຕາປານີຂອງພຣະເຈົ້າ

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ໂຣມ 11:13-36

<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ໂຣມ 11

<u>ຄໍາຖາມເພື່ອການສໍາຣວດ:</u> ທ່ານມີຫຍັງແດ່ທີ່ດີກ່ວາຄົນທີ່ບໍ່ເປັນຄຣິສຕຽນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍເຈດຕະນາຂອງພຣະເຈົ້າເລື່ອງຄວາມສັມພັນຣະຫວ່າງຄຣິສຕຽນ ແລະຄົນທົ່ວໄປ

<u>ແຜນສໍາລັບການສອນ</u>

<u>ນໍາເຣື່ອງເຂົ້າສູ່ຊີວິດຈິງ</u> ( 5 ນາທີ)

1. ພັລນາເຣື່ອງວ່າ, ເວລາພວກເຮົາຮູ້ຄົນຜູ້ໃດຜູ້ນຶ່ງດີຂື້ນ ພວກເຮົາສາມາດຮູ້ໄດ້ວ່າເຮົາຈະໃຊ້ວິທີ ເປັນພະຍານແບບໃດກັບເຂົາຈຶ່ງຈະໄດ້ຜົນ.

2. ບົດຮຽນທີ່ຈະສຶກສາໃນມື້ນີ້ແມ່ນເນັ້ນເຖິງເຣື່ອງ ຄວາມສັມພັນຂອງພຣະເຈົ້າກັບຜູ້ທີ່ເຊື່ອ ແລະ ຜູ້ທີ່ບໍ່ເຊື່ອ.

<u>ນໍາພາການສຶກສາພຣະທັມ</u> (30 ນາທີ)

3. ສລຸບຄວາມໝາຍຂອງ ໂຣມ 11:1-12 ໂດຍໃຊ້ຄໍາອະທິບາຍໃນຫົວເຣື່ອງ, <u>ປັດຈຸບັນນີ້ຊົນຊາດ ອິສຣາເອັນ ບາງສ່ວນກໍຢູ່ໃນຄຣິສຕະຈັກ (11:1-12)</u>; ເນັ້ນວ່າພຣະເຈົ້າບໍ່ໄດ້ປະຕິເສດຊາວຢິວຈົນ ໝົດສິ້ນ (11:1-2),ຊົນຊາດຢິວບາງສ່ວນຍັງເຫຼືອຢູ່ (11:3-5), ແລະພຣະເຈົ້າຍັງມີແຜນສໍາລັບ ຊົນຊາດຢິວ (11:11-12).

4. ນໍາການສຶກສາບົດຮຽນພາກຕໍ່ໆໄປໂດຍໃຊ້ຄໍາອະທິຍາຍເພື່ອຊ່ວຍຄວາມເຂົ້າໃຈ:
   - <u>ກິ່ງຕົ້ນກອກເທດປ່າຢູ່ໃນຄຣິສຕະຈັກ (11:13-24)</u>
   - <u>ແຜນການຂອງພຣະເຈົ້າສໍາລັບ ອິສຣາເອັນ (11:25-33)</u>
   - ໃຊ້ພຣະທັມ ໂຣມ 11:33-36; ໂຢບ 11:7-9; ເອຊາຍາ 55:8-9 ແລະຄໍາອະທິບາຍໃນຫົວ ຂໍ້ເຣື່ອງ, <u>ຄໍາສລຸບຂອງໂປໂລ: ກຽດຕິຍົດຈົ່ງມີແກ່ພຣະເຈົ້າ (11:33-36)</u>.

5. ເບິ່ງພາກສຸດທ້າຍຂອງບົດຮຽນທີ່ເວົ້າ ເຣື່ອງວ່າ, "ພຣະເຈົ້າຊົງໂຜດພວກເຮົາໃຫ້ພົ້ນເພາະພຣະອົງ ຊົງເປັນພຣະເຈົ້າ...ພວກເຮົາຈະຕ້ອງຕອບຮັບພຣະອົງດ້ວຍຄວາມເຊື່ອ." ຊວນນັກຮຽນໃຫ້ຄໍາເຫັນ ໃນເຣື່ອງນີ້. ໃຫ້ເວລາແຕ່ລະຄົນຕາມສົມຄວນ.

<u>ນໍາບົດຮຽນໄປໃຊ້ກັບຊີວິດ</u> (15 ນາທີ)

6. ສົນທະນາຫົວຂໍ້ຕ່າງໆ ຕາມຄໍາຖາມໃນຕອນທ້າຍຂອງບົດຮຽນ.

7. ອະທິຖານປິດດ້ວຍການຂໍໃຫ້ພຣະເຈົ້າເປີດໂອກາດເພື່ອການເປັນພະຍານກັບຄົນເຊື້ອຊາດຍິວທີ່ທ່ານຮູ້ຈັກແລະເພື່ອໂອກາດໃນການເປັນພະຍານກັບໝູ່ເພື່ອນ ແລະຍາດພີ່ນ້ອງຜູ້ທີ່ຍັງບໍ່ເປັນຄຣິສຕຽນ.

# ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?

ບົດທີ 10

ມອບຕົວເອງໃຫ້ປະກອບສ່ວນໃນກຸ່ມ -- ຣວມໝູ່

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 12:1-8

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຣມ 12:1-8

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະກິຕິຄຸນມີຢູ່ໃນແສງສວ່າງຂອງພຣະເຈົ້າ, ບໍ່ວ່າຈະເປັນສ່ວນຕົວ ຫລືສ່ວນຣວມ ຄຣິສຕຽນຄວນຈະມອບຕົວເອງເຂົ້າໃນການຮັບໃຊ້ພຣະເຈົ້າ

<u>ຄຳຖາມເພື່ອການສຳຣວດ:</u> ພຣະຄຸນຂອງພຣະເຈົ້າຈະກໍ່ຮ່າງສ້າງຕົວໃນຊີວິດຂອງບຸກຄົນນັ້ນຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຊ່ວຍໃນການຕັດສິນ ເສັ້ນທາງທີ່ທ່ານຈະມອບຕົວເອງໃຫ້ມີຄວາມຮັບຜິດຊອບໃນພຣະຄຸນອັນເຫລືອລົ້ນຂອງພຣະເຈົ້າ.

## <u>ແຜນການສອນ</u>

### <u>ສະພາບຊີວິດຈິງ</u>

1. ກ່ອນຈະເລີ້ມສອນ, ໃຫ້ຄຣູຊອກຫາຮູບເຮືອນ ຫລື ຮຸ່ນເຮືອນ ມາຕັ້ງໄວ້ຂ້າງໜ້ານັກຮຽນທຸກຄົນ.
   ການປຸກເຮືອນມີສ່ວນປະກອບຫຍັງແດ່ ?
   ການປຸກເຮືອນແມ່ນເອົາຕາມແຜນ (ແຜນຄວາມຄິດ) ຫລືເອົາຕາມຜູ້ອອກແບບ?
   ຄຣູຄວນແນະນຳວ່າໃນໂລກນີ້ມີຢູ່ ແບບແຜນ. 1.) ແບບແຜນຂອງພຣະເຈົ້າ 2.) ແບບແຜນຂອງມະນຸດ. ຖ້າພວກເຮົາຫາກເບິ່ງໃນໂຣມ 12:1-8 ແລ້ວ ພວກເຮົາຈະເຫັນແບບແຜນຂອງພຣະເຈົ້າທີ່ມີຕໍ່ຄຣິສຕະຈັກ, ຕໍ່ທຸກຄົນ ແລະຕໍ່ໂລກ.

2. ອະທິບາຍໃຫ້ຫ້ອງຮຽນເຂົ້າໃຈວ່າ ເຮົາໄດ້ເລີ້ມເຂົ້າຫົວຂໍ້ໃໝ່ແລ້ວ, ຊຶ່ງໃນຜ່ານມາ ພວກເຮົາໄດ້ຮຽນ ກົດຣະບຽບແລະຫລັກການຕ່າງໆ. ໃນຫົວຂໍ້ນີ້ຈະໄດ້ຮຽນກ່ຽວກັບພຣະຄຸນແລະການປະຕິບັດ. ຫົວຂໍ້ມີຢູ່ວ່າ " ເຮົາຈະດຳລົງຊີວິດຢ່າງໃດ?"

## <u>ນຳພາສຶກສາພຣະຄັມພີ</u>

3. ໃຫ້ນັກຮຽນຄົນນຶ່ງທີ່ສມັກໃຈອ່ານ ອ່ານພຣະຄັມພີ ໂຣມ 12:1-2 . ໃຫ້ຄຣູຂຽນຄຳວ່າ "ເຫດສັນນັ້ນ" ໃສ່ກະດານ. ແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈວ່າ ຖ້າພວກເຮົາຫາກພົບຄຳດັ່ງນີ້ ແນ່ນອນຕ້ອງມີຄຳທາງໜ້າ ຫລື ເຣື່ອງລາວມາກ່ອນແລ້ວ ຈຶ່ງໄດ້ໃຊ້ຄຳວ່າ "ເຫດສັນນັ້ນ"
   ໃນພຣະຄັມພີ ຫາກເຫັນຄຳນີ້ແລ້ວ ມັກຈະເປັນຄຳຕັກເຕືອນໃຫ້ຮັບຜິດຊອບເໝືອນຢູ່ໃນໂຣມ 12:1-2 ໄດ້ເນັ້ນໜັກ ຕັກເຕືອນໃຫ້ພວກເຮົາຖວາຍຕົວເປັນເຄື່ອງບູຊາທີ່ມີຊີວິດ ໂດຍເຫັນແກ່ພຣະຄຸນຂອງພຣະເຈົ້າ.
   ຊັກຊວນໃຫ້ຫ້ອງຮຽນ ຄິດຄຳນຶງເຖິງພຣະຄຸນພຣະເຈົ້າທີ່ມີໃນຊີວິດຂອງເຂົາເຈົ້າ.

ຖາມຄຳຖາມ: ເຄື່ອງບູຊາທີ່ມີຊີວິດໝາຍຄວາມວ່າຢ່າງໃດ?
ໃຫ້ນັກຮຽນຕອບຕາມສມັກໃຈ.

4. ໃຫ້ນັກຮຽນອ່ານພຣະຄັມພີ ຂໍ້ຕໍ່ໄປໃຜກໍໄດ້ (ໂຣມ 12:3-5)
ໃຫ້ນັກຮຽນແຕ່ລະຄົນອອກໄປກະດານແລ້ວ ແຕ້ມຮູບແຕ່ລະພາກສ່ວນຂອງຮ່າງກາຍ ເພື່ອໃຫ້ເປັນຮູບຄົນ. ຖາມນັກຮຽນວ່າ ຮູບຮ່າງຂອງຄົນ ແລະຄຣິສຕະຈັກເໝືອນກັນບໍ່? (ເໝືອນກັນ) ຄຣູຈະມີໂອກາດຊີ້ ໃຫ້ນັກຮຽນເຫັນວ່າ ແຕ່ລະພາກສ່ວນຂອງຮ່າງກາຍ ກໍຄືກັນກັບແຕ່ລະພາກສ່ວນຂອງຄຣິສຕະຈັກ. ພາກສ່ວນຕ່າງໆມີຄວາມສຳຄັນເໝືອນກັນໝົດ, ມີຄຸນຄ່າເທົ່າກັນໝົດ, ມີໜ້າທີ່ຄືກັນໝົດ ການປະກອບສ່ວນໃນຄຣິສຕະຈັກເປັນສິ່ງຈຳເປັນທີ່ສຸດ ໃນການຈະເຣີນເຕີບໂຕ.

5. ແຍກຫ້ອງຮຽນໃຫ້ເປັນສາມໝູ່. ຢາຍຂໍ້ພຣະຄັມພີໃຫ້ແຕ່ລະໝູ່
ໝູ່ທີ 1 : ໂຣມ 12:6-8
ໝູ່ທີ 2 : 1ໂກຣິນໂທ 12:4-10, 28-30
ໝູ່ທີ 3 : ເອເຟໂຊ 4:11-12; 1ເປໂຕ 4: 10-11
ຖາມນັກຮຽນວ່າໄດ້ພົບຂອງພຣະຣາຊທານຫຍັງແດ່ ? ແລ້ວຄຣູຈະຂຽນບັນຊີຂອງພຣະຣາຊທານໃສ່ຂ້າງ ກະດານ. ວາງຄຳຖາມ:
ເປັນຫຍັງພຣະເຈົ້າຈຶ່ງມອບຂອງພຣະຣາຊທານນີ້ໃຫ້ແກ່ຄຣິສຕະຈັກ?
ທ່ານສາມາດເວົ້າໄດ້ບໍ່ວ່າທ່ານມີຂອງພຣະຣາຊທານຫຍັງແດ່?

<u>ຄຳຖາມຊວນຄິດ</u>

6. ທວນຄືນ ໄປຫາເຣື່ອງທີ່ເຮົາໄດ້ເວົ້າກັນຜ່ານມາໃນເບື້ອງຕົ້ນ. ພວກເຮົາຈະຕິດຕາມແບບແຜນ ຂອງໂລກຫລືຈະຕິດຕາມແຜນການຂອງພຣະເຈົ້າ.
ພຣະຄຣິດໄດ້ປ່ຽນແປງຂ້ອຍແລ້ວຫລືຍັງ ຫລື ຂ້ອຍຍັງຢູ່ໃນແບບແຜນຂອງໂລກນີ້ຢູ່ ?
ຂອງພຣະຣາຊທານທີ່ຂ້ອຍມີ ແມ່ນມາຈາກຂ້ອຍ ຫລື ມາຈາກພຣະເຈົ້າ?
ຂ້ອຍເຮັດວຽກປະກອບສ່ວນກັບຄົນອື່ນຫລືບໍ່ ຫລື ຂອງພຣະຣາຊ ທານຂອງຂ້ອຍຫາກເໜືອຄົນອື່ນໂພດ?
ທ່ານເຫັນພຣະຄຣິດປາກົດໃນຕົວທ່ານຫລືບໍ່ ?

7. ກ່ຽວກັບຂອງພຣະຣາຊທານ, ພະຍາຍາມໜູນໃຈນັກຮຽນໃຫ້ນຳຂອງພຣະຣາຊທານນັ້ນມາໃຊ້ໃນຄຣິສຕະຈັກ ຫລືມີຂໍ້ຂັດຂ້ອງຢ່າງໃດຂໍໃຫ້ຄຣູຊ່ວຍແກ້ໃຂ ເພາະທຸກວັນນີ້ ການທຳງານໃຫ້ກັບພຣະເຈົ້າແມ່ນມີຄວາມຕ້ອງການຫລາຍ.

8. ໂດຍສະເພາະແມ່ນຢູ່ໃນ 3 ຢ່າງນີ້:
ການປະກາດກັບຄົນທົ່ວໄປ
ສ້າງສາວົກເພື່ອຄຣິສຕະຈັກແລະທົ່ວໂລກ
ເສີມຂຍາຍຄຣິສຕະຈັກທີ່ມີຢູ່ ໃຫ້ເຂັ້ມແຂງແລະສ້າງໂບດໃໝ່
ຖາມ: ໃນການສຶກສາ ໂຣມ 12:1-8 ຊ່ວຍເຮົາຢ່າງໃດແດ່ໃນການປະກາດ?

9. ອະທິຖານປິດປະຊຸມ ໂດຍໃຫ້ນັກຮຽນຄົນນຶ່ງທີ່ສມັກໃຈນໍາພາ. ອະທິຖານເພື່ອໃຫ້ໄດ້ພົບກັນໃນອາທິດຕໍ່ໄປ.

## ຊ່ວຍແນວຄິດພິເສດໃນການສອນ

ຂ້ອຍຈະຖວາຍຕົວຂ້ອຍເອງຢ່າງໃດ?

ໃຫ້ໝາຍເຄື່ອງໝາຍຕີນກາໃສ່ຕໍ່ໜ້າຂໍ້ຄວາມຕໍ່ໄປນີ້ຊຶ່ງເຫັນເໝາະສົມກັບຊີວິດຂອງທ່ານຫລາຍທີ່ສຸດ.

______1 ຂ້ອຍຮູ້ວ່າພຣະເມດຕາ ກະຣຸນາຄຸນ ຂອງພຣະເຈົ້າມີຢູ່ໃນຊີວິດຂອງຂ້ອຍ

______2 ຂ້ອຍໄດ້ຖວາຍຕົວໃນການດໍາເນີນຊີວິດປະຈໍາວັນໃຫ້ກັບພຣະເຈົ້າທຸກໆວັນ

______3 ຂ້ອຍໄດ້ເປີດໂອກາດໃຫ້ພຣະເຈົ້າປ່ຽນແປງຊີວິດຂອງຂ້ອຍ ເພື່ອຈະຄ້າຍຄືພຣະອົງ

______4 ຂ້ອຍຮູ້ວ່າຂ້ອຍມີຂອງພຣະຣາຊທານຝ່າຍວິນຍານ, ແລະຂ້ອຍກໍໄດ້ໃຊ້ເພື່ອເສີມສ້າງພຣະກາຍຂອງພຣະຄຣິດ

______5 ຂ້ອຍໃຫ້ກຽດແກ່ຂອງພຣະຣາຊທານທີ່ຄົນອື່ນມີ, ແລະຂ້ອຍກໍໄດ້ໜູນໃຈເຂົາ ເພື່ອໃຊ້ໃນການເປັນຄຣິສຕຽນ.

ໃນ 5 ຂໍ້ນີ້ ມີຈັກຂໍ້ທີ່ທ່ານໝາຍດ້ວຍຄວາມຈິງໃຈ? ຍັງຢູ່ບ່ອນໃດທີ່ທ່ານຄວນຈະປັບປຸງແກ້ໃຂ ເພື່ອໃຫ້ຈະເຣີນຂຶ້ນ?

ອີງຕາມບົດຮຽນທີ່ໄດ້ຮຽນມາ ວ່າພຣະເຈົ້າຊົງປະທານຂອງພຣະຣາຊທານໃຫ້ແກ່ທຸກໆຄົນ ແລະກໍເພື່ອໃຫ້ໃຊ້ເພື່ອເປັນປໂຍດໃນການຮັບໃຊ້ພຣະອົງ.

ສົນທະນາກັນໂດຍອີງໃສ່ຂໍ້ຄໍາຖາມຕໍ່ໄປນີ້:

- ຄົນທີ່ໄດ້ຮັບຂອງພຣະຣາຊທານນັ້ນ ຄວນຈະເຮັດຢ່າງໃດແດ່ ?
- ລາວຄວນຈະເຮັດຫຍັງແດ່ ເພື່ອຈະໄດ້ຮັບຂອງພຣະຣາຊທານ?
- ທ່ານຄິດບໍ່ວ່າ ເວລາເຂົາໄດ້ຮັບຂອງພຣະຣາຊທານແລ້ວເຂົາມີຄວາມຮູ້ສຶກຢ່າງໃດ?
- ຜູ້ທີ່ມອບຂອງປະທານໃຫ້ນັ້ນເດ ຈະມີຄວາມຮູ້ສຶກຢ່າງໃດ?

(ນີ້ແມ່ນການສໍາແດງ ໃນໂຣມ12:6-8 ຊຶ່ງກ່າວເຖິງຂອງພຣະຣາຊທານທີ່ໄດ້ມອບໃຫ້ເພື່ອເສີມສ້າງຄຣິສຕະຈັກ)

## **ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?**

ບົດທີ 11

ດຳເນີນຊີວິດຕາມທາງແຫ່ງຄວາມຮັກ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 12:9-21; 13: 8-10

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຣມ 12:9-21; 13:8-14

<u>ຈຸດສຳຄັນຂອງບົດຮຽນນີ້:</u> ດຳເນີນຊີວິດໃນຄວາມຮັບຜິດຊອບຕໍ່ພຣະຄຸນຂອງພຣະເຈົ້າເອີ້ນວ່າ ການດັດແປງຊີວິດດ້ວຍຄວາມຮັກ.

<u>ຄຳຖາມເພື່ອການສຳຣວດ:</u> ຖ້າເຮົາຫາກດຳເນີນຊີວິດໃນຄວາມຮັກແທ້ໆ, ເຮົາຈະຢູ່ຢ່າງໃດ ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໄຈ້ແຍກໃຫ້ເຫັນເສັ້ນທາງ ວ່າເຮົາຈະເອົາຄວາມຮັກມາປະຕິບັດໃນຊີວິດແບບໃດ.

<u>ແຜນການສອນ</u>

<u>ສະພາບຊີວິດຈິງ</u>

1. ໃຫ້ເລີ້ມບົດຮຽນດ້ວຍຄຳຖາມນີ້ "ຖ້າທ່ານຢາກເວົ້າຫຍໍ້ຂອງຊີວິດການເປັນຄຣິສຕຽນໃຫ້ເປັນຄຳດຽວ ທ່ານຈະໃຊ້ຄຳໃດ ຈຶ່ງຈະເຫມາະສົມ?" ແລ້ວພະຍາຍາມຟັງວ່າ ໃຜຈະເວົ້າຄຳວ່າຮັກ ອອກມາແດ່ບໍ່, ຫລືຖ້າບໍ່ມີໃຜເວົ້າແທ້ໆ ກໍໃຫ້ຄຣູພະຍາຍາມ ນຳພານັກຮຽນໃຫ້ໄປຫາຄຳວ່າຮັກ. ຖ້າໄດ້ແລ້ວໃຫ້ຂຽນ "ຮັກ" ໂຕໃຫຍ່ໆໃສ່ກະດານ. ແລ້ວຖາມຕໍ່ໄປອີກວ່າ "ຄຳວ່າຮັກແມ່ນຕົວແທນຂອງຄຣິສຕຽນແທ້ບໍ່? ຄຳວ່າ ຄຣິສຕຽນ ແມ່ນຮວມຢູ່ໃນຄຳດຽວນີ້ແທ້ບໍ່?
   ໃຫ້ຄົນນຶ່ງອ່ານ 1ໂຢຮັນ 4:8 ແລ້ວຫມາຍໄວ້ຄຳວ່າ ພຣະເຈົ້າຊົງເປັນຄວາມຮັກ. ແນ່ນອນບໍ່ ວ່າພຣະເຈົ້າຢູ່ໃນຫົວໃຈຂອງຄຣິສຕຽນແທ້ບໍ່?

<u>ນຳພາສຶກສາພຣະຄັມພີ</u>

2. ໃຫ້ນັກຮຽນຮູ້ວ່າຫົວຂໍ້ໃຫຍ່ ຂອງບົດຮຽນແມ່ນ "ເຮົາຈະດຳເນີນຊີວິດຢ່າງໃດ?" ລື້ມຄືນ ວ່າ ອາທິດຜ່ານມາເຮົາໄດ້ຄຳຕອບນຶ່ງມາແລ້ວ ຄືວ່າເຮົາຕ້ອງມອບຕົວເອງໃຫ້ປະກອບສ່ວນກັບກຸ່ມ. ມື້ນີ້ພວກເຮົາຈະມາຮຽນເຖິງຄຳຕອບທີສອງ . ໃຫ້ຄົນນຶ່ງອ່ານຄຳຖາມ ແລະ ອີກຄົນນຶ່ງໃຫ້ອ່ານຫົວຂໍ້ບົດຮຽນສຳລັບວັນນີ້.

3. ຍົກຄຳຖາມຂື້ນມາ "ຖ້າພວກເຮົາດຳເນີນຕາມທາງຄວາມຮັກແທ້ຈິງ ເຮົາຄວນປະພຶດຕົວຢ່າງໃດ? ໃຫ້ນັກຮຽນໃຫ້ຄຳຄິດເຫັນຈັກຄົນນຶ່ງ ແລ້ວກໍແນະນຳໃຫ້ເປີດໄປຫາ ໂຣມ 12:9-13 ແລະໃຫ້ອ່ານໃນໃຈ. ໃຫ້ຄຣູສັງເກດເບິ່ງການອ່ານຂອງນັກຮຽນວ່າ ນັກຮຽນອ່ານແລ້ວງບໍ່. ແລ້ວໃຫ້ອ່ານຄຳຖາມຄືນອີກເທື່ອນຶ່ງ. ຖາມນັກຮຽນວ່າໂປໂລແນະນຳພວກເຮົາຢ່າງໃດແດ່.

4. ຈະເປັນການດີບໍ່ຖ້າທຸກຄົນໃນໂລກຫາກດຳເນີນຊີວິດເຫມືອນດັ່ງກ່າວມາ?
ແຕ່ວ່າມັນກໍເປັນໄປໄດ້ຍາກ ເພາະແນວຕ່າງກັນ, ການເຫັນພ້ອມບໍ່ຄືກັນ, ຖ້າຢ່າງນັ້ນເຮົາຈະເຮັດກັບພວກນີ້ຢ່າງໃດ?

5. ນຳພານັກຮຽນເບິ່ງລົງໄປ ເຖິງ ຂໍ້ 14-21
ເວົ້າເຖິງວິທີຮັບຜິດຊອບອີງຕາມຄຳສັ່ງຂອງໂປໂລ. ອະທິບາຍວ່າໂປໂລຢາກໃຫ້ພວກເຮົາທຳຢ່າງໃດ? ຄືຈະບໍ່ແມ່ນເຮັດຊົ່ວຕອບແທນການຊົ່ວ ລາວບອກວ່າໃຫ້ຢູ່ກັບທຸກຄົນຢ່າງມີສັນຕິສຸກ. ຍັງບໍ່ພໍທໍ່ນັ້ນໂປໂລຍັງໄດ້ບອກເຮົາວ່າການແກ້ແຄ້ນນັ້ນແມ່ນຂອງພຣະເຈົ້າ. (ຂໍ້19) ພວກເຮົາຮູ້ແລ້ວວ່າ ເປັນການຍາກສຳລັບພວກເຮົາ ດັ່ງນັ້ນໂປໂລຈຶ່ງແນະນຳໃຫ້ພວກເຮົາຝຶກຝົນ ຄຳວ່າຝຶກຝົນບໍ່ແມ່ນການເຮັດໄດ້ເທື່ອນຶ່ງເທື່ອດຽວ.

6. ອ່ານໂຣມ 13:8-10 ໃຫ້ອ່ານແຕ່ລະຂໍ້ງໄປ. ແລ້ວແຕ່ລະຂໍ້ໃຫ້ມີການສົນທະນາໄປດ້ວຍ.
ຂໍ້ 8 ຢ່າເປັນຫນີ້ ນັ້ນຄືຢ່າເປັນຫນີ້ ສິ່ງທີ່ເຮົາຈະໃຊ້ຄືນບໍ່ໄດ້. ໂປໂລເວົ້າໃນທີ່ນີ້ແມ່ນເວົ້າເຣື່ອງຄວາມຮັກ. ເຮົາສາມາດຈ່າຍຫນີ້ຮັກ ໃຫ້ພຣະເຈົ້າໄດ້ ໂດຍການສຳແດງ ຄວາມຮັກຕໍ່ຄົນອື່ນ, ສຳແດງຄວາມເມດຕາກະຣຸນາຕໍ່ຄົນອື່ນ. ຖ້າເຮົາຈະຈ່າຍໃຫ້ຄົບຖ້ວນທີ່ພຣະເຈົ້າໄດ້ໃຫ້ເຮົານັ້ນຄົງເປັນໄປໄດ້ຍາກ.
ຂໍ້ 9 ໂປໂລໄດ້ຍົກພຣະຄຳ 5 ຂໍ້ອອກມາຈາກພຣະບັນຍັດ 10 ປະການ. ຂໍ້ເຫລົ່ານັ້ນ ແມ່ນການປະຕິບັດຕໍ່ເພື່ອນມະນຸດດ້ວຍກັນ ເອົາຣວມກັນເປັນຂໍ້ດຽວ ຄື ໃຫ້ຮັກເພື່ອນບ້ານເຫມືອນຮັກຕົນເອງ. ແມ່ນໃຜເປັນເພື່ອນບ້ານຂອງເຮົາ? ຈຳໄດ້ບໍ່ທີ່ພຣະເຢຊູກ່າວເຣື່ອງຊາວຊາມາເຣັຽຜູ້ໃຈດີ. ຜູ້ທີ່ເປັນເພື່ອນບ້ານທີ່ແທ້ຈິງນັ້ນກໍຄື ຜູ້ມີຄວາມຮັກ ຄວາມເມດຕາ ໃຫ້ການຊ່ວຍເຫລືອໃນຍາມຂັດສົນ ໃນຍາມຕ້ອງການ.
ຂໍ້ 10 ໃນນີ້ໂປໂລບອກວ່າ ຖ້າເຈົ້າຮັກແລ້ວ ເຈົ້າກໍຈະບໍ່ມີອັນຕລາຍ. ແລະກໍເປັນການປະຕິບັດພຣະບັນຍັດຢ່າງຄົບຖ້ວນແລ້ວ.

7. ຕົວຢ່າງຫນູນໃຈ: ວັນນຶ່ງຫລັງຈາກເລີກຈາກຫ້ອງຮຽນ ໂຮງຮຽນວັນອາທິດແລ້ວ.ຜູ້ຄົນກໍພົບປະສັງສັນກັນ ຖາມສະບາຍດີ ຖາມສຸກທຸກກ່ອນຈະເຂົ້າຫ້ອງນະມັສການ. ຄຳຖາມທີ່ລຸງຄຳສີມັກໄດ້ຮັບກໍຄື: ສະບາຍດີ ດີໃຈຫລາຍທີ່ເຫັນເຈົ້າໃນວັນນີ້. ຂໍຄວາມຮັກຂອງພຣະເຈົ້າປົກຫຸ້ມທ່ານເຖີດ.

ລຸງຄຳສີດີໃຈຍິ້ມເປີ່ຍບັກໃຫຍ່ເລີຍ. ເວລາໄປນັ່ງບ່ອນນະມັສການແລ້ວ ລູກສາວນ້ອຍອາຍຸ 10 ປີກໍມານັ່ງຕັກ. ດ້ວຍຄວາມດີໃຈທີ່ລາວຍັງມີຢູ່ ລາວຈຶ່ງເວົ້າກັບລູກລາວວ່າ ພໍ່ຮັກລູກຫລາຍເດີ . ລູກສາວນ້ອຍກໍຕອບລາວວ່າ ພໍບໍ່ຈຳເປັນຕ້ອງບອກລູກດອກ ຂະນ້ອຍຮູ້ໃນການກະທຳຂອງພໍ່ກໍພໍແຮງແລ້ວຫລະ.
ທ່ານບໍ່ຢາກໃຫ້ຄົນອື່ນກ່າວແກ່ທ່ານດັ່ງນັ້ນບໍ່? ສັດຕຣູຂອງເຮົາເດ ? ເພື່ອນຮ່ວມງານເຮົາເດ ? ເພື່ອນບ້ານໃກ້ຄຽງເຮົາເດ ? ແລະຄອບຄົວຂອງເຮົາເດ ?

8. ອ່ານຄຳຖາມທີ່ຄວນຄິດ ທັງຫມົດ 4 ຂໍ້ ໃຫ້ອ່ານເທື່ອລະຂໍ້ ແລ້ວຢຸດພັກເປັນໄລຍະໄປ.
ນັກຮຽນຈະບໍ່ຄ່ອຍຕອບ ເພາະບໍ່ແນ່ໃຈວ່າຈະຖືກຫລືບໍ່?

ໃຫ້ນຳໄປຄິດ....................

9. ນຳພາກັນອະທິຖານ ຂໍໃຫ້ໄດ້ພົບກັນອີກໃນອາທິດໜ້າ.

## ຊ່ວຍແນວຄິດພິເສດໃນການສອນ

| | ຄຣິສຕຽນຄວນເຮັດ | ຄຣິສຕຽນບໍ່ຄວນເຮັດ |
|---|---|---|
| ໂຣມ 19:9 | ______________ | ________________ |
| ໂຣມ 12:10 | ______________ | ________________ |
| ໂຣມ 12:11 | ______________ | ________________ |
| ໂຣມ 12:12 | ______________ | ________________ |
| ໂຣມ 12:13 | ______________ | ________________ |
| ໂຣມ 12:14 | ______________ | ________________ |
| ໂຣມ 12:15 | ______________ | ________________ |
| ໂຣມ 12:16 | ______________ | ________________ |
| ໂຣມ 12:17 | ______________ | ________________ |
| ໂຣມ 12:18 | ______________ | ________________ |
| ໂຣມ 12:19 | ______________ | ________________ |
| ໂຣມ 12:20 | ______________ | ________________ |
| ໂຣມ 12:21 | ______________ | _______________ |

# ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?

## ບົດທີ 12

## ຄວາມສັມພັນຣະຫວ່າງຄຣິສຕຽນກັບຜູ້ປົກຄອງ

---

<u>ຂໍ້ພຣະຄັມພີສຳລັບບົດຣຽນນີ້:</u> ໂຣມ 13:1-7

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຣມ 13:1-7

<u>ຈຸດສຳຄັນຂອງບົດຣຽນນີ້:</u> ຄຣິສຕຽນຕ້ອງຍອມຢູ່ໃຕ້ອຳນາດຂອງຜູ້ປົກຄອງເພາະຜູ້ທີ່ມີອຳນາດກໍແມ່ນພຣະເຈົ້າຊົງແຕ່ງຕັ້ງຂຶ້ນ.

<u>ຄຳຖາມເພື່ອການສຳຣວດ:</u> ແມ່ນຫຍັງຄືສິ່ງສຳຄັນໃນຄວາມສັມພັນຣະຫວ່າງຄຣິສຕະຈັກແລະການຄອງ ແລະ ຣະຫວ່າງຄຣິສຕຽນແລະຜູ້ປົກຄອງຂອງເຂົາເຈົ້າ?

<u>ຈຸດປະສົງຂອງບົດຣຽນນີ້:</u> ເພື່ອສິດສອນໃຫ້ຮູ້ຈັກຄວາມສັມພັນຣະຫວ່າງຄຣິສຕະຈັກ ແລະ ການປົກຄອງ ແລະ ຣະຫວ່າງຄຣິສຕຽນແລະຜູ້ປົກຄອງຂອງເຂົາເຈົ້າ.

<u>ແຜນການສອນ</u>

<u>ສະພາບຊີວິດຈິງ</u>

1. ຈົ່ງຮູ້ວ່າແຕ່ລະປະເທດໃນໂລກນີ້ມີການປົກຄອງຫມົດຫລືອີກແນວນຶ່ງເວົ້າໄດ້ວ່າຄະນະປົກຄອງ. ຄະນະປົກຄອງບາງຄະນະກໍດີ ບາງຄະນະກໍບໍ່ດີ. ຖາມໃນຫ້ອງຮຽນລອງເບິ່ງວ່າ ຕາມທີ່ຮູ້ເຫັນມາ ມີຄະນະປົກຄອງໃດແດ່ທີ່ດີ ແລະມີຄະນະປົກຄອງໃດແດ່ທີ່ບໍ່ດີ. ໃນປະຫວັດສາດຜ່ານມາ ມີປະເທດໃດແດ່ມີຄະນະປົກຄອງດີ ແລະມີປະເທດໃດແດ່ທີ່ມີຄະນະປົກຄອງທີ່ບໍ່ດີ ? ແມ່ນຫຍັງທີ່ເຮັດໃຫ້ເຂົາດີ ແລະບໍ່ດີ ? ການປົກຄອງດີນັ້ນແມ່ນ ເຂັ້ມແຂງ, ເປັນທັມ, ຮັບໃຊ້ປະຊາຊົນດີ, ມີສິດສເນີພາບ, ເກັບພາສີສົມເຫດສົມຜົນ, ມີສິດເສລີພາບໃນການປາກເວົ້າ, ແລະມີສິດເສລີພາບໃນການນັບຖືສາສນາ. ການປົກຄອງທີ່ບໍ່ດີ ແມ່ນຂົ່ມຂູ່ປະຊາຊົນ, ບໍ່ຜ່ອນຫນັກຜ່ອນເບົາ, ເກັບພາສີແພງ, ມົວເມົານຳອຳນາດເງິນຄຳ, ບໍ່ສ້າງແປງປະເທດຊາດບ້ານເມືອງ, ປະຊາຊົນບໍ່ມີສິດປາກສິດເວົ້າ, ເອົາອຳນາດຫນີບເຕັງປະຊາຊົນ ແລະເອົາການທະຫານມາບັງຄັບ.

2. ວາງຄຳຖາມ ເປັນຫຍັງເຮົາຈຶ່ງຕ້ອງການງປົກຄອງ? ສົນທະນາວ່າການປົກຄອງຊ່ວຍເຮົາຫຍັງແດ່? (ການທະຫານປ້ອງກັນປະເທດ, ຄວບຄຸມເງິນຕຣາ, ໂຮງຮຽນ, ໂຮງຫມໍ, ຫົນທາງ, ກົດຫມາຍ, ໄປສະນີ, ຕຳຣວດ, ຣົດດັບເພີງ, ສວນຫລິ້ນສາທາຣະນະ....
ຖ້າບໍ່ມີຄະນະປົກຄອງເດຈະເປັນຢ່າງໃດ ? ພວກເຮົາມີສິດເສຣີພາບເຮັດຫຍັງຕາມໃຈ, ບໍ່ມີໃຜຟັງໃຜເດ ແລ້ວໂລກນີ້ຈະເປັນຢ່າງໃດ ?

3. ບົດຮຽນໃນວັນນີ້ ພວກເຮົາຈະມາຮຽນ ວ່າເວລາເຫັນຊົນຊາດຄຣິສຕຽນນັ້ນພວກເຮົາຈະມີການພົວພັນກັບຜູ້ປົກຄອງຄືແນວໃດ ເຊັ່ນໃນປະເທດຊາດທີ່ເຮົາອາໃສຢູ່.

## ນຳພາສຶກສາພຣະຄັມພີ

4. ໃຫ້ນັກຮຽນຄົນນຶ່ງອ່ານພຣະຄັມພີ ໂຣມ 13:1-7 ເມື່ອອ່ານສຸດແລ້ວໃຫ້ນັກຮຽນໃນຫ້ອງອອກຄວາມຄິດເຫັນກ່ຽວກັບການປົກຄອງ. (ບອກເຂົາເຈົ້າດ້ວຍວ່າໃນປະເທດນີ້ສາມາດເວົ້າກ່ຽວກັບຣັຖບານຫລືການປົກຄອງໄດ້ສະບາຍ)
ໃນຈົດຫມາຍນີ້ ໂປໂລໄດ້ຂຽນຈົດຫມາຍໄປຫາຄຣິສຕຽນທີ່ຢູ່ກຸງໂຣມ. ແລະກໍຮູໄດ້ວ່າພວກນີ້ຢູ່ໃນຕົວເມືອງ ແລະກໍເປັນເມືອງຫລວງຊໍ້າ. ຊາວໂຣມັນທັງຫລາຍ ຄິດວ່າພວກຢິວແລະພວກຄຣິສຕຽນເປັນພວກເຣັດໃຫ້ເຂົາເຈົ້າມີບັນຫາ. ເພາະພວກຄຣິສຕຽນບອກວ່າພຣະເຢຊູຄຣິດເປັນກະສັດ ແລະເປັນພຣະເຈົ້າ ແລະກໍບໍ່ນັບຖືກະສັດຊີຊາຣເປັນພຣະເຈົ້າຄືພວກເຂົາ. ຈຶ່ງຮັບຮູ້ອີກວ່າໃນສມັຍນັ້ນຄົນຢິວ ຖ້າຜູ້ໃດ້ຫາກກໍ່ເຣື່ອງ, ສ້າງບັນຫາ ຈະຖືກເນຣະເທດອອກຈາກກຸງໂຣມທັນທີ.

5. ໂປໂລໄດ້ຕັກເຕືອນຄຣິສຕຽນໃຫ້ຣະມັດຣະວັງກ່ຽວກັບອຳນາດການປົກຄອງ. ລາວຍັງໄດ້ອະທິບາຍຕໍ່ໄປວ່າ ອຳນາດການປົກຄອງຫລືຜູ້ນຳທີ່ມະນຸດເປັນຜູ້ນຳນັ້ນ ກໍເພາະວ່າເຂົາເກີດຂຶ້ນມາໃນຄອບຄົວນັ້ນ.(ເຊື້ອສາຍຂອງກະສັດ) ສ່ວນປະຊາຊົນທັງຫລາຍແມ່ນບໍ່ມີໂອກາດຈະເປັນຜູ້ນຳຫລືມີອຳນາດໄດ້ , ເຖິງແມ່ນຈະປັບປຸງຕົວເອງຫລາຍປານໃດ. ສິ່ງດຽວທີ່ເຂົາສາມາດເຣັດໄດ້ກໍຄື ຢູ່ພາຍໃຕ້ອຳນາດຂອງກະສັດ ແລະຢູ່ໄປໂດຍບໍ່ຕ້ອງມີປາກມີສຽງ. ໂປໂລຊຶ່ງເປັນຊາວໂຣມັນ ເກີດມາຈາກຄອບຄົວທີ່ຮັ່ງມີ, ແລະຄອບຄົວທີ່ມີອິດທິພົນດ້ວຍ. ລາວຮູ້ດີວ່າສະພາບການເປັນຢ່າງໃດ. ລາວຈຶ່ງໄດ້ຕັກເຕືອນວ່າໃຫ້ຢູ່ຢ່າງສະງົບ ຢ່າເຣັດໃຫ້ຄົນອື່ນສົງສັຍໄປໃນທາງທີ່ບໍ່ຖືກຕ້ອງເລີຍ.

6. ແບ່ງຫ້ອງຮຽນໃຫ້ເປັນ 3 ຫມວດ
ຫມວດທີ 1: ອ່ານໂຣມ 13:1-2 ; ອ່ານຕີໂຕ 3:1; ແລະອ່ານ 1ເປໂຕ 2:13-17 ແລ້ວໃຫ້ຕອບຄຳຖາມຕໍ່ໄປນີ້:
- ເປັນຫຍັງເຮົາຈຶ່ງຕ້ອງການໆປົກຄອງ?
-ອຳນາດຂອງການປົກຄອງມາຈາກໃສ?
-ຈະມີຫຍັງເກີດຂຶ້ນຕໍ່ຜູ້ທີ່ບໍ່ເຊື່ອຟັງກົດຫມາຍແລະຜູ້ນຳ?

ຫມວດທີ່2: ອ່ານໂຣມ 13:3-4; ແລະອ່ານກິຈການ 5:27-29 ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້:
- ຜູ້ນຳອຳນາດການປົກຄອງມີຫນ້າທີ່ຫຍັງແດ່?
-ໃຜຄືຜູ້ທີ່ເຮົາຄວນຢ້ານ ຜູ້ນຳ ຫລື ການປົກຄອງ?
-ຄຣິສຕຽນຄວນເຊື່ອຟັງໃຜຫລາຍກ່ວາ?

ຫມວດທີ່ 3: ອ່ານໂຣມ 13:5-7 ແລະອ່ານມາຣະໂກ 12:13-17 ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້:
-ເຫດຜົນສອງຢ່າງທີ່ເຮົາຄວນໃຫ້ເຊື່ອຟັງຜູ້ນຳການປົກຄອງນັ້ນຄືອັນໃດແດ່?
-ຄຣິສຕຽນຄວນມີພຶຕິການແນວໃດກ່ຽວກັບການເສັຽຊ່ວຍພາສີ?
-ເງື່ອນໄຂໃດ ທີ່ຄຣິສຕຽນບໍ່ຄວນເຊື່ອຟັງຜູ້ນຳ?

ເວລາຖາມແລະຕອບນັ້ນຫມວດອື່ນຢາກຈະປະກອບສ່ວນນຳກໍໄດ້.

7. ອະທິບາຍເພີ້ມເຕີມ ວ່າໃນປະເທດນີ້ ການປົກຄອງໄດ້ໃຫ້ພວກເຮົາມີສິດນັບຖືສາສນາ ຊຶ່ງບໍ່ໄດ້ພົວພັນກັບການເມືອງ ຫມາຍຄວາມວ່າບໍ່ໄດ້ເອົາສາສນາໄປກວມລວມເຖິງປະເທດ, ບໍ່ໄດ້ເອົາສາສນາ

ໄປບັງຄັບອຳນາດການປົກຄອງ. ແລະອຳນາດການປົກຄອງກໍບໍ່ໄດ້ບັງຄັບໃຫ້ໃຜນັບຖືສາສນາໃດ.

8. ຄຣູອ່ານ 1 ຕີໂມທຽວ 2:1-2 ແລ້ວໜູນໃຈນັກຮຽນໃຫ້ ອະທິຖານເພື່ອຜູ້ນຳປະເທດ ໃນທົ່ວໂລກ ເພື່ອໃຫ້ມີສັນຕິສຸກ.

9. ອະທິຖານເພື່ອຜູ້ນຳປະເທດລາວ, ປະເທດອະເມຣິກາ........ ແລະທົ່ວໂລກ ເບິ່ງຄືວ່າໃຫຍ່ໂພດ ແຕ່ພຣະເຈົ້າຟັງພວກເຮົາ.

## ຊ່ວຍແນວຄິດພິເສດໃນການສອນ

ກ່ອນເຂົ້າຫ້ອງຮຽນຄຣູຕ້ອງໄປພິມແລ້ວຕັດໄວ້ ເມື່ອເຖິງເວລາແລ້ວກໍແຈກໃຫ້ນັກຮຽນທັນທີ.

## ໃບສຳຫລວດຕົວເອງ

ສຳຫລວດຕົວເອງ ວ່າ ໄດ້ເຮັດດີແລ້ວສ່ຳໃດໃນການດຳລົງຊີວິດໃນປະເທດນີ້ເລກ 1 ໝາຍຄວາມວ່າ ຍັງຕ່ຳ ເລກ 5 ໝາຍຄວາມວ່າເຮັດໃດດີທີ່ສຸດແລ້ວ

| | |
|---|---|
| 1. ຂ້ອຍມີຄວາມເຄົາຣົບນັບຖືຜູ້ນຳການປົກຄອງ | 1 2 3 4 5 |
| 2. ຂ້ອຍນັບຖືກົດຈາຣະຈອນ | 1 2 3 4 5 |
| 3. ຂ້ອຍໄປປ່ອນບັດເລືອກຕັ້ງ | 1 2 3 4 5 |
| 4. ຂ້ອຍເສັຽຄ່າພາສີຕາມເວລາ | 1 2 3 4 5 |
| 5. ຂ້ອຍອະທິຖານເພື່ອການປົກຄອງ | 1 2 3 4 5 |

ຫລັງຈາກນັ້ນກໍໃຫ້ນັກຮຽນສົມກັນອອກມາ ວ່າ

| | |
|---|---|
| ຖ້າໃຜຫາກມີຄະແນນ 5 ຫາ 10 | ຕ້ອງໄດ້ປັບປຸງຕົວເອງ |
| ----------------11 ຫາ 15 | ພໍໃຊ້ໄດ້ |
| ----------------16 ຫາ 20 | ດີແລ້ວ |

## **ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?**

ບົດທີ 13

ຮັບຮູ້ຄຣິສຕຽນທີ່ແຕກຕ່າງກັບທ່ານ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 14:1-4, 13-19; 15:1-7

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ໂຣມ 14:1--15:1-7

<u>**ຈຸດ**ສຳຄັນຂອງບົດຮຽນນີ້:</u> ຄຣິສຕຽນຕ້ອງເອົາແບບຢ່າງພຣະເຢຊູໃນການຕ້ອນຮັບຮູ້ຄົນອື່ນ ຜູ້ທີ່ກຳລັງຝຶກຝົນຂອງຕົນເອງໃນແນວທາງໃຫມ່.

<u>ຄຳຖາມເພື່ອການສຳຣວດ:</u> ທ່ານຈະຮັບຮູ້ເຂົາຢ່າງໃດ ເມື່ອເຂົາຫາກເປັນຄຣິສຕຽນທີ່ປະຕິບັດແຕກຕ່າງກັບທ່ານ ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອນຳພານັກຮຽນໃຫ້ຮູ້ຈັກໄຈ້ແຍກ ແລະ ເພື່ອບໍ່ໃຫ້ຕັດສິນເພື່ອນຄຣິສຕຽນດ້ວຍກັນ.

<u>ແຜນການສອນ</u>

<u>ສະພາບຊີວິດຈິງ</u>

1. ຫລັງຈາກທີ່ພຣະເຢຊູສິ້ນພຣະຊົນແລ້ວ, ພຣະອົງມີຜູ້ຕິດຕາມຢູ່ປະມານ 120 ຄົນ. (ກິຈການ 1:15) ຄົນພວກນັ້ນເປັນຜູ້ທີ່ເຊື່ອແລະກໍເປັນພວກທີ່ສ້າງຕັ້ງໂບດພວກທຳອິດ. ໂບດກໍຈະເຣີ່ມຂຶ້ນເຖິງ 5000 ຄົນ. (ກິຈການ 4:4) ຫມົດທຸກຄົນເຮັດວຽກຮ່ວມກັນ ແລະເກືອບເວົ້າໄດ້ວ່າມີແນວຄິດແບບດຽວກັນ (ກິຈການ 4:32)

2. ຂຽນລົງໃນກະດານ "ເວລາໃດມີບັນຫາເກີດຂື້ນ?"
ປັດຈຸບັນນີ້ເດ ພວກເຮົາມີຫລາຍໂບດ (ຫລາຍຄະນະ) ຫລາຍຄວາມເຊື່ອ, ແລະໂບດນ້ອຍໆໃຫຍ່ໆກໍຕິດຕໍ່ອອກຈາກກັນ ເພາະຄວາມເຫັນບໍ່ເຂົ້າກັນ. ນີ້ກໍມາຈາກຣະບົບຄວາມເຊື່ອແລະການປົກຄອງ ແຕ່ສ່ວນຫລາຍແລ້ວກໍແມ່ນອອກມາຈາກ ຄຣິສຕຽນບໍ່ຍອມຮັບຄວາມແຕກຕ່າງຊຶ່ງກັນແລະກັນ. ໂປໂລ ເຕືອນຄຣິສຕຽນກຸງໂຣມ ແລະ ພວກເຮົາດ້ວຍ ວ່າ ພວກເຮົາຄວນຍອມຮັບຄວາມແຕກຕ່າງຊຶ່ງກັນແລະກັນ. ຂໍໃຫ້ອ່ານ ໂຣມ 15:7

<u>ນຳພາສຶກສາພຣະຄັມພີ</u>

3. ບອກໃຫ້ນັກຮຽນຮູ້ວ່າ ຫົວຂໍ້ໃຫຍ່ຂອງບົດຮຽນນີ້ແມ່ນ "ເຮົາຈະດຳເນີນຊີວິດຢ່າງໃດ?"
ສາມບົດຮຽນທີ່ພວກເຮົາຮຽນຜ່ານມາ ແລະບົດຮຽນນີ້ ເປັນບົດຮຽນສຸດທ້າຍສຳລັບພຣະຄັມພີ ໂຣມ ອາທິດຕໍ່ໄປພວກເຮົາຈະໄດ້ຮຽນກ່ຽວກັບພຣະຄັມພີເດີມ.

ຖາມນັກຮຽນວ່າ ໂປໂລຂຽນຈົດໝາຍໄປຫາໃຜຢູ່ກຸງໂຣມ ? (ຄຣິສຕຽນໃນກຸງໂຣມ)

ຄຣິສຕຽນໃນກຸງໂຣມມີໃຜແດ່? (ຢິວ ແລະ ພວກຕ່າງຊາດ ຫລືພວກທີ່ບໍ່ເປັນຢິວ)

4. ລອງສັງເກດເບິ່ງຄົນໆນຶ່ງທີ່ຢາກຄື ອີກຄົນນຶ່ງ ລາວຈະພະຍາຍາມເຮັດໃຫ້ຄືຄົນນັ້ນ ໂດຍການເຮັດ ແລ້ວເຮັດ ຊໍ້າໄປຊໍ້າມາ ບໍ່ແມ່ນຂອງງ່າຍໆ. ມີແຕ່ວ່າ ຖ້າພວກເຮົາຫາກຢູ່ໃນໝວດໃດ ເຮົາມີຄວາມ ສົນໃຈຢ່າງດຽວກັນ ແລ້ວກໍປະຕິບັດລະບຽບແບບດຽວກັນ. ໃນຂໍ້ 1-4 ທີ່ໂປໂລກ່າວໄວ້ ແມ່ນແນໃສ່ ບັນຫາ ທີ່ເກີດຂຶ້ນຢູ່ໃນໂບດກຸງໂຣມ ເຣື່ອງການກິນຊີ້ນ. ອະທິບາຍ ວ່າຄຣິສຕຽນໃນໂບດມີທັງຄົນຢິວ ເກົ່າແກ່ (ພວກອ່ອນ) ພວກນີ້ຈຳກັດແທ້ໆເຣື່ອງການກິນຊີ້ນ ວ່າຈະປັບປຸງແນວໃດ ປະກອບສ່ວນແນວ ໃດ ຊີ້ນທີ່ວາງໃນຕລາດ ຖ້າພວກເຂົາຫາກບໍ່ຮູ້ວ່າມາຈາກໃສຖ້າຢ່າງນັ້ນແລ້ວເຂົາຈະບໍ່ກິນເປັນເດັດ ຂາດ. ເຂົາເວົ້າຄິດວ່າຈະເຮັດດີທີ່ສຸດ , ເພື່ອບໍ່ໃຫ້ບາບມາໄກ້ໄດ້.

ບັດນີ້ຫັນມາພວກທີ່ບໍ່ເປັນຢິວ (ພວກແຂງ) ຮູ້ສຶກວ່າໄດ້ຮັບການໄຖ່ຈາກພຣະເຢຊູໝົດແລ້ວ ແລະກົດ ໝາຍເກົ່າໆຂອງຢິວນັ້ນກໍຄົງຈະໝົດໄປດ້ວຍ ຈະບໍ່ຖືກັນອີກແລ້ວວ່າໃຜຈະກິນຫລືບໍ່ກິນ.

ຖ້າອ່ານໃນ ໂຣມ 14:6 ແລະ 21, ໂປໂລໄດ້ເຕືອນສອງພວກທີ່ຖົກຖຽງກັນ:

- ການຮັກສາມື້ ຮັກສາວັນ, ວັນຊະບາໂຕ ເປັນວັນເສົາ ແທນທີ່ຈະເປັນວັນອາທິດ.
-ການດື່ມເຫລົ້າວາຍ

5. ຖາມນັກຮຽນໃນຫ້ອງວ່າ ໂປໂລໝາຍຄວາມວ່າແນວໃດ ໃນຂໍ້ທີ 4.

ນຳພາທຸກຄົນໃຫ້ເລັ່ງໃສ່ພຣະເຈົ້າ:

-ພວກເຮົາເປັນຄົນຮັບໃຊ້ຂອງພຣະເຈົ້າທຸກໆຄົນ
-ບໍ່ມີຜູ້ໃດຮັບໃຊ້ລື່ນຜູ້ໃດ ຫລື ຮັບໃຊ້ບໍ່ດີລື່ນຜູ້ໃດ
-ພວກເຮົາທຸກຄົນເປັນຜູ້ຮັບຜິດຊອບຕໍ່ພຣະເຈົ້າດ້ວຍກັນທຸກຄົນ
-ເປັນໜ້າທີ່ຂອງພຣະເຈົ້າທີ່ຈະຕັດສິນຄົນງານຂອງພຣະອົງ, ບໍ່ແມ່ນພວກເຮົາ

6. ນຳພານັກຮຽນໃຫ້ອ່ານໂຣມ 14:13-19

ແນະນຳນັກຮຽນໃຫ້ເບິ່ງຄັກໆ ແລະຄິດຄັກໆວ່າ ຂໍ້ທີ່ອ່ານຜ່ານມານີ້ມີຄວາມໝາຍຢ່າງໃດ. ໂປໂລ ຕ້ອງການຢາກໃຫ້ພວກເຮົາເຮັດຢ່າງໃດ.

ໃຫ້ຄົນນຶ່ງຫລືສອງຄົນ ເວົ້າວ່າຈຸດເປົ້າໝາຍຂອງໂປໂລມີຄືແນວໃດ.

ຄຣູຈຶ່ງຄ່ອຍສລູບຢູ່ໃນຂໍ້ທີ 19.

7. ບັດນີ້ມາເຖິງ ໂຣມຂໍ້ທີ 15:1-7

ໃຫ້ນັກຮຽນເປີດພຣະຄັມພີ ແລະຕິດຕາມໄປນຳກັນ. ບົ່ງບອກເຖິງຜູ້ຮັບໃຊ້ຕ້ອງຣະມັດຣະວັງ ແລະ ບອກເຖິງພຶດຕິການຂອງຜູ້ຮັບໃຊ້ ໃນຂໍ້ 2 ແລະ 3.

ໃຫ້ພານັກຮຽນທ່ອງຈຳຂໍ້ພຣະຄຳ ຂໍ້ 7

8. ນຳພານັກຮຽນ ຈັບມືກັນ ແລ້ວພາກັນອະທິຖານ ຂໍພລັງອຳນາດຈາກພຣະເຈົ້າ ໃຫ້ຍອມຮັບຄຣິສຕຽນ ອື່ນໆ ທີ່ມີການກະທຳ ແນວຄິດບໍ່ຄືກັບເຮົາ.

# ຊ່ວຍແນວຄິດພິເສດໃນການສອນ

ໃນຂໍ້ຕໍ່ໄປນີ້ທ່ານຈະເຫັນພ້ອມຫລືບໍ່ເຫັນພ້ອມຂໍ້ໃດກໍໄດ້ ຈົ່ງ ຕັ້ງໃຈຟັງ:

1 ມັນເປັນຂອງທັມມະດາທີ່ຂ້ອຍຄວນຈະຕັດສິນຄົນອື່ນ

໒ ມັນຈະສຳຄັນຫຍັງທີ່ຂ້ອຍຈະກິນ ແລະດື່ມ ເພາະພຣະເຢຊູບອກວ່າອາຫານທຸກຊະນິດເຮົາກິນໄດ້

3 ຖ້າມີບາງຄົນບໍ່ພໍໃຈໃນການກະທຳໂດຍຄວາມເຊື່ອຂອງຂ້ອຍ, ມັນກໍເປັນຂອງທັມມະດາ ເພາະຄົນບໍ່ຮູ້ຈັກຄັກວ່າຂ້ອຍແມ່ນໃຜ

4 ສິ່ງສຳຄັນທີ່ສຸດໃນຊີວິດຄຣິສຕຽນ ແມ່ນຄວາມຊອບທັມ, ຄວາມສັນຕິສຸກ, ຄວາມຍິນດີ ແລະບໍ່ຕໍ່ຕ້ານຜູ້ໃດທັງຫມົດ.

5 ພວກເຮົາຕ້ອງເປັນຄົນແກ້ບັນຫາ ໃນແຜ່ນດິນໂລກ ເຖິງແມ່ນວ່າຈະຫຍຸ້ງຍາກ ຈົນເຖິງໄດ້ຖວາຍຊີວິດກໍຕາມ.